# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

28 ເມສາ-04 ພຶດສະພາ 2023
ປີທີ 12
ສະບັບທີ 920
ລາຍສັບຂະດາ


## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນເມສາ 2023





(ສພຊ) ປະຕິບັດຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ມະຕິວ່າດ້ວຍການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ. ໃນລະຫວ່າງວັນທີ 25-26 ເມສາ 2023 ຄະນະປະຈຳສະພາແຫ່ງຊາດ ໄດ້ດຳເນີນກອງປະຊຸມປະຈຳເດືອນເມສາ 2023 ເພື່ອພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດຕາມຂອບເຂດສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ. ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນເມສາ 2023 ໄດ້ດຳເນີນ ໂດຍການເປັນປະທານນຳພາກອງປະຊຸມຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ, ເຂົ້າຮ່ວມກອງປະຊຸມມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ ແລະ ແຂກທີ່ຖືກເຊີນຈາກພາກສ່ວນທີ່ກ່ຽວຂ້ອງ.

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນເມສາ 2023 ໄດ້ດຳເນີນໃນສະພາບເງື່ອນໄຂທີ່ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ກຳລັງສຸມໃສ່ຕິດຕາມ, ຊຸກຍູ້ການຈັດຕັ້ງຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແແຫ່ງຊາດ ຊຸດທີ IX, ບັນດາກົງຈັກເສນາທິການ ກຳລັງປະສານສົມທົບກັບບັນດາກະຊວງ, ອົງການ ໃນການກະກຽມຮ່າງກົດໝາຍ ແລະ ບັນດາເນື້ອໃນຂອງກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX, ການກະກຽມໃຫ້ແກ່ການດຳເນີນກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ; ຫຼາຍພາກສ່ວນກຳລັງນຳເອົາຜົນສຳເລັດຂອງກອງປະຊຸມ ໄປເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນໄດ້ຮັບຊາບ

ອ່ານຕໍ່ໜ້າ 3

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງຮອງປະທານສະພານະຄອນຫຼວງຮ່າໂນ້ຍ



ອ່ານໜ້າ 2

## ປະທານກຳມາທິການການຕ່າງປະເທດ ຕ້ອນຮັບເອກອັກຄະລັດຖະທູດອີຢູ ປະຈຳອາຊຽນ

(ສພຊ) ໃນວັນທີ 25 ເມສາ 2023 ທີ່ສະພາແຫ່ງຊາດ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ Igor DRIESMANS ເອກອັກຄະລັດຖະທູດແຫ່ງສະຫະພາບເອີຣົບ (ອີຢູ) ປະຈຳອາຊຽນ ພ້ອມດ້ວຍທ່ານ ນາງ Ina MARCIULIONYTE ເອກອັກຄະລັດຖະທູດອີຢູ ປະຈຳ

ອ່ານຕໍ່ໜ້າ 4

## ຮອງປະທານສະພາແຫ່ງຊາດ ຊຸກຍູ້ວຽກງານ ກຊສ

(ສພຊ) ວັນທີ 21 ເມສາຜ່ານມາ, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາທ່ານຮອງປະທານກຳມາທິການຈາກສະພາແຫ່ງຊາດ ແລະ ວິຊາການການທີ່ກ່ຽວຂ້ອງຈຳນວນໜຶ່ງ ໄດ້ເຄື່ອນໄຫວຊຸກຍູ້ວຽກງານຢູ່ທີ່ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ໂດຍການຕ້ອນຮັບຂອງທ່ານນາງ ບຸນຄຳ ວໍລະຈິດ ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ມີບັນດາທ່ານຮອງລັດຖະມົນຕີ ກຊສ,

ອ່ານຕໍ່ໜ້າ 2



## ຄະນະຜູ້ແທນສະພາແຫ່ງຊາດລາວ ສຳເລັດການຢ້ຽມຢາມ ສາທາລະນະລັດ ເບລາຣຸດ



(ສພຊ) ໃນລະຫວ່າງວັນທີ 19-21 ເມສາ 2023 ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ພ້ອມດ້ວຍຄະນະ ໄດ້ເດີນທາງຢ້ຽມຢາມສາທາລະນະລັດເບລາຣຸດ ຢ່າງເປັນທາງການ.

ອ່ານຕໍ່ໜ້າ 2

## ວັນທີ 1 ພຶດສະພາ ເປັນວັນບຸນໃຫຍ່ຂອງຊົນຊັ້ນກຳມະກອນ

### (ເນື່ອງໃນໂອກາດວັນກຳມະກອນສາກົນຄົບຮອບ 137 ປີ)

**ໂດຍ: ສີວັນ**

ເພື່ອທວງເອົາສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານໃນທົ່ວໂລກ, ໃນທ້າຍສະຕະວັດທີ XVIII ຫາຕົ້ນສະຕະວັດທີ XIX ຫຼາຍປະເທດຢູ່ທະວີບເອີຣົບ ແລະ ອາເມຣິກາ ໄດ້ພ້ອມກັນຈັດຕັ້ງເປັນກຸ່ມ, ເປັນຂະບວນລຸກຮື້ຂຶ້ນຕໍ່ສູ້ກັບຊົນຊັ້ນນາຍທຶນ,

ອ່ານຕໍ່ໜ້າ 3



ແລກປ່ຽນບົດຮຽນ...

ອ່ານຕໍ່ໜ້າ 5



ສະພາປະຊາຊົນແຂວງວຽງຈັນ...

ອ່ານຕໍ່ໜ້າ 6



ເຜີຍແຜ່ຜົນສຳເລັດກອງປະຊຸມ...

ອ່ານຕໍ່ໜ້າ 7

**ຊົມເຊີຍວັນທີ 1 ພຶດສະພາ ວັນກຳມະກອນສາກົນ (01/05/1886-01/05/2023) ຄົບຮອບ 137 ປີ ຢ່າງສຸດໃຈ!**



## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ) ວັນທີ 21 ເມສາ 2023 ທີ່ສະພາແຫ່ງຊາດ, ສະຫາຍ ຄໍາໃບ ດໍາລັດ ຮອງປະທານສະພາແຫ່ງຊາດ ແຫ່ງ ສປປລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ນາງ ຟຸງ ທິ ທ໊ງ ຮ່າ ກໍາມະການປະຈໍາພັກນະຄອນຫຼວງຮ່າໂນ້ຍ, ຮອງປະທານສະພານະຄອນຫຼວງຮ່າໂນ້ຍ ສສ.ຫວຽດນາມ ພ້ອມດ້ວຍຄະນະ ເນື່ອງໃນໂອກາດເດີນທາງມາຢ້ຽມຢາມ ເຮັດວຽກຮ່ວມກັບສະພາປະຊາຊົນນະຄອນຫຼວງວຽງຈັນ ໃນລະຫວ່າງວັນທີ 20-23 ເມສາ 2023.

ໂອກາດດັ່ງກ່າວ, ສະຫາຍ ຄໍາໃບ ດໍາລັດ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ຕີລາຄາສູງຕໍ່ສະຫາຍ ນາງ ຟຸງ ທິ ທ໊ງ ຮ່າ ໃນການມາຢ້ຽມຢາມ ສປປລາວ ໃນຄັ້ງນີ້ ເປັນການນໍາເອົາໄມຕີຈິດມິດຕະພາບທີ່ສະໜິດສະໜົມຂອງລັດຖະບານ, ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນທ້ອງຖິ່ນ ກໍຄືປະຊາຊົນຫວຽດນາມອ້າຍນ້ອງມາສູ່ລັດຖະບານ, ສະພາແຫ່ງຊາດ ກໍຄືປະຊາຊົນລາວບັນດາເຜົ່າ ເຊິ່ງເປັນການຮັດແໜ້ນສາຍພົວພັນລະຫວ່າງສະພາປະຊາຊົນນະຄອນຫຼວງວຽງຈັນ ກັບ ສະພາປະຊາຊົນນະຄອນຫຼວງຮ່າໂນ້ຍ ກໍຄືສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ ທັງເປັນການປະກອບສ່ວນອັນສໍາຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງຊາດ ກໍຄືລະຫວ່າງສອງສະພາແຫ່ງຊາດລາວ ແລະ ຫວຽດນາມ ໃຫ້ນັບມື້ນັບແໜ້ນແຟ້ນຍິ່ງໆຂຶ້ນ ພ້ອມທັງແຈ້ງໃຫ້ຮູ້ກ່ຽວກັບການສະເຫຼີມສະຫຼອງປີສາມັກຄີມິດຕະພາບ (ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມື ຄົບຮອບ 45 ປີ ແລະ ວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 60 ປີ) ຢ່າງເປັນຂະບວນຟົດຟື້ນ ໃນປີ 2022 ຜ່ານມາ ແຈ້ງໃຫ້ຮູ້ກ່ຽວກັບຜົນງານການເຄື່ອນໄຫວໃນໄລຍະຜ່ານມາ ແລະ ແຜນການເຄື່ອນໄຫວຂອງສະພາແຫ່ງຊາດລາວໃນຕໍ່ໜ້າ ເປັນຕົ້ນແມ່ນໄດ້ໄປຖອດຖອນບົດຮຽນກັບ ສສ.ຫວຽດນາມ ເຊິ່ງລົງເລິກຂົງເຂດລະບົບກົງຈັກການຈັດຕັ້ງຂອງສະພາປະຊາຊົນຂັ້ນທ້ອງຖິ່ນຢູ່ນະຄອນດານັງ ແຂວງກວາງນາມ ແລະ ນະຄອນຫຼວງຮ່າໂນ້ຍ ໃນເດືອນກຸມພາທີ່ຜ່ານມາ ແລະ ຄາດຄະເນໃນເດືອນທັນວາ ປີ 2023 ນີ້ ສະພາແຫ່ງຊາດລາວຈະໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມລັດຖະສະພາ 3 ປະເທດ (ກໍາປູເຈຍ-ລາວ-ຫວຽດນາມ CLV) ແລະ ໃນເດືອນສິງຫາ ປີ 2024 ຈະເປັນເຈົ້າພາບຈັດກອງປະຊຸມລັດຖະສະພາອາຊຽນ (ໄອປາ AIPA).

ພ້ອມນັ້ນ, ສະຫາຍ ນາງ ຟຸງ ທິ ທ໊ງ ຮ່າ ກໍໄດ້ກ່າວສະແດງຄວາມຂອບໃຈຕໍ່ສະຫາຍ ຄໍາໃບ ດໍາລັດ ທີ່ໄດ້ເສຍສະຫຼະເວລາອັນມີຄຸນຄ່າໃຫ້ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງລາຍງານໃຫ້ຮູ້ກ່ຽວກັບຈຸດປະສົງຂອງການຢ້ຽມຢາມເຮັດວຽກຢູ່ ສປປລາວ ໃນຄັ້ງນີ້ ໃຫ້ສະຫາຍຮອງປະທານສະພາແຫ່ງຊາດ ແຫ່ງ ສປປລາວ ຮັບຮູ້.

(ສອນສັກ ວັນວິໄຊ)

## ຮອງປະທານ...

(ຕໍ່ຈາກໜ້າ 1)

ຮອງລັດຖະມົນຕີ ຮອງຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ຫົວໜ້າຫ້ອງການ, ບັນດາຄະນະກົມ, ຄະນະພະແນກທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນການເຄື່ອນໄຫວຄັ້ງນີ້ ກໍແມ່ນເພື່ອມາຊຸກຍູ້ ແລະ ຊີ້ນໍາການຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດ ແລະ ການກະກຽມບັນດາເອກະສານຂອງຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ທີ່ກຽມຈະເຂົ້າຜ່ານໃນກອງປະຊຸມສະໄໝສາມັນຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະເປີດຂຶ້ນໃນໄວໆນີ້.

ໃນທີ່ປະຊຸມ, ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈໍາປີ 2023 ໂດຍສະເພາະແມ່ນຄາດໝາຍຂອງຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ; ພ້ອມກັນນັ້ນ, ກໍຍັງໄດ້ຮັບຟັງການລາຍງານກ່ຽວກັບຮ່າງຍຸດທະສາດການຄຸ້ມຄອງ, ການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າແຫ່ງຊາດ ຮອດປີ 2030, ສະພາບນໍ້າຕາມລໍາແມ່ນໍ້າຂອງ, ສະພາບການປ່ຽນແປງດິນຟ້າອາກາດ ໃນ ສປປລາວ, ສະພາບໄພແຫ້ງແລ້ງ ແລະ ແຜນການຮັບມື, ສະພາບໄຟໄໝ້ລາມປ່າ ແລະ ມາດຕະການແກ້ໄຂ ແລະ ຄວາມຄືບໜ້າການອອກໃບຕາດິນ ຈາກບັນດາກົມກອງທີ່ກ່ຽວຂ້ອງ; ພາຍຫຼັງໄດ້ຮັບຟັງການລາຍງານແລ້ວ ບັນດາຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ປຶກສາຫາລືແລກປ່ຽນຄໍາຄິດຄໍາເຫັນຢ່າງກົງໄປກົງມາ.

ໃນຕອນທ້າຍ, ທ່ານ ສົມມາດ ພົລເສນາ ກໍຍັງໄດ້ມີທິດຊີ້ນໍາ ໃຫ້ ກຊສ ເພື່ອເປັນບ່ອນອີງ ແລະ ໃຫ້ທິດເຍືອງທາງໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ເຊິ່ງທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ຜົນສໍາເລັດທີ່ ກຊສ ສາມາດຍາດມາໄດ້ໃນໄລຍະຜ່ານມາ; ພ້ອມກັນນັ້ນ, ຍັງໄດ້ຊີ້ນໍາໃຫ້ ກຊສ ເອົາໃຈໃສ່ບາງວຽກງານທີ່ຕິດພັນກັບມະຕິຂອງສະພາແຫ່ງຊາດ ເພື່ອໃຫ້ສາມາດບັນລຸຕາມຄາດໝາຍທີ່ໄດ້ກໍານົດໄວ້ ແລະ ເອົາໃຈໃສ່ ການກະກຽມບັນດາເອກະສານຈໍານວນໜຶ່ງຂອງ ກຊສ ເຊິ່ງມີແຜນຈະໄດ້ຜ່ານໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະເປີດຂຶ້ນໃນໄວໆນີ້.

## ຄະນະ...

(ຕໍ່ຈາກໜ້າ 1)

ໃນການຢ້ຽມຢາມຄັ້ງນີ້ ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ເຂົ້າຢ້ຽມຂໍ່ານັບທ່ານ Valery Mitskevich ຮອງປະທານສະພາຜູ້ແທນປະຊາຊົນຂອງສະພາແຫ່ງຊາດແຫ່ງ ເບລາຣຸດ ໂດຍທ່ານໄດ້ກ່າວຕ້ອນຮັບຄະນະຜູ້ແທນສະພາແຫ່ງຊາດລາວຢ່າງອົບອຸ່ນ ແລະ ໄດ້ຕີລາຄາສູງຕໍ່ສາຍພົວພັນຮ່ວມມືທີ່ເປັນມູນເຊື້ອແລະດີງາມລະຫວ່າງສອງປະເທດ ເບລາຣຸດ-ລາວ ກໍຄື ລະຫວ່າງສອງສະພາແຫ່ງຊາດ ທີ່ໄດ້ມີການພົວພັນປະສານງານ ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີພາກພື້ນ ແລະ ສາກົນມາໂດຍຕະຫຼອດ, ພ້ອມນັ້ນ ທັງສອງປະເທດກໍໄດ້ມີການຮ່ວມມືກັນຫຼາຍດ້ານ ແລະ ທ່ານໄດ້ເນັ້ນຕໍ່ຄະນະຜູ້ແທນລາວ ໃນການສືບຕໍ່ສົ່ງເສີມການຮ່ວມມືລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ ໃຫ້ມີຄວາມແໜ້ນແຟ້ນຍິ່ງຂຶ້ນກວ່າເກົ່າ.

ໃນໂອກາດດັ່ງກ່າວ, ທ່ານ ຮສ. ປອ. ລິນຄໍາ ດວງສະຫວັນ ຫົວໜ້າຄະນະຜູ້ແທນລາວ ກໍໄດ້ສະແດງຄວາມຂອບໃຈຕໍ່ທ່ານຮອງປະທານສະພາ ແລະ ສະພາແຫ່ງຊາດ ຕ້ອນຮັບ ແລະ ອໍານວຍຄວາມສະດວກແກ່ຄະນະຜູ້ແທນລາວເປັນຢ່າງດີ, ທ່ານໄດ້ຕີລາຄາສູງຕໍ່ສາຍພົວພັນຮ່ວມມືທີ່ເປັນມູນເຊື້ອ ແລະ ຍາວນານລະຫວ່າງສອງປະເທດ ລາວ-ເບລາຣຸດ ກໍຄືສອງອົງການນິຕິບັນຍັດຂອງສອງປະເທດ ແລະ ທ່ານໄດ້ແຈ້ງກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມ ຂອງ ສປປລາວ ແລະ ການຈັດຕັ້ງປະຕິບັດວຽກງານຂອງສະພາແຫ່ງຊາດລາວໃນໄລຍະຜ່ານມາ. ຫົວໜ້າຄະນະຜູ້ແທນສະພາແຫ່ງຊາດລາວໄດ້ສະແດງຄວາມຂອບໃຈ ແລະ ຕີລາຄາສູງ ທີ່ເບລາຣຸດໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນ ສປປລາວ ມາໂດຍຕະຫຼອດ. ພ້ອມດຽວກັນນັ້ນ, ທ່ານຍັງໄດ້ແຈ້ງກ່ຽວກັບການກະກຽມເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນຄັ້ງທີ 45 ທີ່ຈະຈັດຂຶ້ນຢູ່ ສປປລາວ ໃນປີ 2024 ແລະ ຫວັງວ່າສະພາແຫ່ງຊາດເບລາຣຸດຈະໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນສະພາແຫ່ງຊາດລາວ ໃນການເປັນເຈົ້າພາບກອງປະຊຸມໃຫຍ່ຄັ້ງນີ້. ພ້ອມດຽວກັນນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ພົບປະເຮັດວຽກກັບທ່ານ Sergei Syrankov ສະມາຊິກກໍາມະການປະຈໍາວຽກງານການຮ່ວມມືສາກົນ, ປະທານຄະນະມິດຕະພາບລັດຖະສະພາ ເບລາຣຸດ-ລາວ ພ້ອມດ້ວຍຄະນະ ເຊິ່ງໄດ້ປຶກສາຫາລືກັນກ່ຽວກັບການສົ່ງເສີມການຮ່ວມມືຂອງສອງລັດຖະສະພາໃນຕໍ່ໜ້າ ໂດຍສະເພາະແມ່ນການຊຸກຍູ້ສົ່ງເສີມໃຫ້ລັດຖະບານຂອງສອງປະເທດ ເອົາໃຈໃສ່ສືບຕໍ່ຈັດຕັ້ງປະຕິບັດບັນດາສັນຍາ ແລະ ໂຄງການຮ່ວມມືຂອງສອງປະເທດທີ່ມີຮ່ວມກັນ ລວມໄປເຖິງການສົ່ງເສີມໃຫ້ມີການຮ່ວມມືທາງດ້ານເຕັກໂນໂລຊີ, ກະສິກໍາ, ການທ່ອງທ່ຽວ, ການຄ້າ, ການລົງທຶນ, ການສຶກສາ ແລະ ອື່ນໆ ໃຫ້ຫຼາຍຂຶ້ນ.

ໃນໂອກາດດຽວກັນ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ພົບປະກັບທ່ານ Alexander Egorov ປະທານຄະນະບໍລິຫານງານທະນາຄານພັດທະນາແຫ່ງຊາດເບລາຣຸດ, ທັງເປັນປະທານຮ່ວມຂອງຄະນະກໍາມະການຮ່ວມມືລະຫວ່າງເບລາຣຸດ-ລາວ ເຊິ່ງໄດ້ປຶກສາຫາລືກັນກ່ຽວກັບການສືບຕໍ່ຈັດຕັ້ງປະຕິບັດວຽກງານການຮ່ວມມືທາງດ້ານເສດຖະກິດ-ການຄ້າໃນຕໍ່ໜ້າ ເນື່ອງຈາກໃນໄລຍະຜ່ານມາ ມີການແຜ່ລະບາດຂອງພະຍາດໂຄວິດ-19 ຈຶ່ງເຮັດໃຫ້ຫຼາຍໂຄງການຮ່ວມມືຍັງບໍ່ມີຄວາມຄືບໜ້າເທົ່າທີ່ຄວນ ແຕ່ມາຮອດປັດຈຸບັນ ສະຖານະການໄດ້ດີຂຶ້ນ ປະກອບກັບ ສປປລາວ ໄດ້ສໍາເລັດການສ້າງທາງລົດໄຟລາວ-ຈີນ ເຊິ່ງຈະເປັນອີກທ່າແຮງໜຶ່ງໃນການສົ່ງເສີມການຮ່ວມມືທາງດ້ານການຄ້າ-ການລົງທຶນ ລະຫວ່າງລາວ-ເບລາຣຸດ ແລະ ໃນໂອກາດດັ່ງກ່າວ ທ່ານຫົວໜ້າຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ສະເໜີໃຫ້ທ່ານປະທານຄະນະບໍລິຫານງານທະນາຄານພັດທະນາແຫ່ງຊາດເບລາຣຸດ ຊ່ວຍສົ່ງເສີມການລົງທຶນໃນລາວໃຫ້ຫຼາຍຂຶ້ນ ໂດຍສະເພາະແມ່ນການສ້າງຜະລິດຕະພັນໃດໜຶ່ງຈາກທ່າແຮງທີ່ ສປປລາວມີ, ການສົ່ງເສີມວຽກງານການທ່ອງທ່ຽວ ແລະ ການພັດທະນາເສດຖະກິດດີຈີຕອນ ໃນ ສປປລາວ ເຊິ່ງທ່ານປະທານຄະນະບໍລິຫານງານທະນາຄານພັດທະນາແຫ່ງຊາດເບລາຣຸດ ກໍໄດ້ຕອບຮັບເອົາການສະເໜີດັ່ງກ່າວ ແລະ ຈະຊ່ວຍສະໜັບສະໜູນການຮ່ວມມື ແລະ ການພັດທະນາໃນລາວຢ່າງເຕັມທີ່.

ນອກຈາກນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ເຂົ້າຮ່ວມງານມະຫະກໍາກ່ຽວກັບເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານສາກົນ ເຊິ່ງເປັນງານວາງສະແດງກ່ຽວກັບເຄື່ອງມື ແລະ ການນໍາໃຊ້ເຕັກໂນໂລຊີໃນວຽກງານຕ່າງໆ ພ້ອມທັງເປັນເວທີປຶກສາຫາລື ແລະ ແລກປ່ຽນກ່ຽວກັບການພັດທະນາ ແລະ ການນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ, ພ້ອມນັ້ນ ກໍໄດ້ເດີນທາງໄປຢ້ຽມຊົມຫໍພິພິດຕະພັນແຫ່ງຊາດເບລາຣຸດ, ຢ້ຽມຢາມ ແລະ ພົບປະກັບຜູ້ບໍລິຫານຂອງ The Hi-Tech Park ຂອງເບລາຣຸດ ເຊິ່ງເປັນສູນລວມໃນການສະໜອງການບໍລິການດ້ານໄອທີ, ການພັດທະນາສະຕາສອັບ ແລະ ເຕັກໂນໂລຊີຕ່າງໆ ແລະ ໄປຢ້ຽມຢາມເຂດອຸດສາຫະກໍາ The great Stone park ເຊິ່ງເປັນໂຄງການຮ່ວມມືທີ່ໃຫຍ່ທີ່ສຸດລະຫວ່າງ ສ.ເບລາຣຸດ ແລະ ສປຈີນ ແລະ ໄດ້ຢ້ຽມຊົມພື້ນຖານການພັດທະນາເສດຖະກິດ ແລະ ການພັດທະນາໂຕເມືອງທັນສະໄໝຂອງ ສາທາລະນະລັດ ເບລາຣຸດ ອີກຈໍານວນໜຶ່ງ.



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຕິດພັນກັບການລົງພົບປະກັບປະຊາຊົນຜູ້ມີສິດເລືອກຕັ້ງ, ຮັບຟັງຄວາມຄິດຄວາມເຫັນ, ຄຳສະເໜີຕ່າງໆຂອງປະຊາຊົນຕໍ່ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ເພື່ອເປັນຂໍ້ມູນໃນການປະສານສົມທົບກັບ ພາກສ່ວນກ່ຽວຂ້ອງຄົ້ນຄວ້າແກ້ໄຂ.

ກອງປະຊຸມໃນຄັ້ງນີ້ ໄດ້ຮັບຟັງການລາຍງານ ແລະ ພິຈາລະນາ, ຕົກລົງບັນຫາວຽກງານສຳຄັນ ເປັນຕົ້ນ ບົດລາຍງານກ່ຽວກັບຄວາມຄືບໜ້າ ຂອງການກະກຽມປັບປຸງກົດໝາຍຂົງເຂດສະພາແຫ່ງຊາດ ຈຳນວນ 4 ສະບັບ; ບົດລາຍງານກ່ຽວກັບການສະເໜີແຕ່ງຕັ້ງຜູ້ພິພາກສາ ຊັ້ນໜຶ່ງຂອງສານປະຊາຊົນສູງສຸດ, ສານປະຊາຊົນທ້ອງຖິ່ນ, ສານທະຫານ; ການສະເໜີແຕ່ງຕັ້ງປະທານ, ຮອງປະທານສານປະຊາຊົນທ້ອງຖິ່ນ ແລະ ການສະເໜີແຕ່ງຕັ້ງຫົວໜ້າຄະນະສານປົກຄອງຂອງ ສານປະຊາຊົນສູງສຸດ; ບົດລາຍງານກ່ຽວກັບແຜນການດຳເນີນກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ; ແຜນການດຳເນີນກອງປະຊຸມສະຫຼຸບຕີລາຄາການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ກາງສະໄໝ ແລະ ທິດທາງແຜນການຮອດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ ຊຸດທີ X; ບົດລາຍງານການກະກຽມເປັນເຈົ້າພາບຈັດກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ CLV ຄັ້ງທີ 1 ຢູ່ທີ່ນະຄອນຫຼວງວຽງຈັນ ສປປລາວ; ບົດລາຍງານການແຕ່ງຕັ້ງຄະນະຮັບຜິດຊອບລະດັບຊາດ ກອງປະຊຸມໄອປາ AIPA; ລາຍງານການຢ້ຽມຢາມ ແລະ ເຮັດວຽກຮ່ວມກັນລະຫວ່າງສອງກຳມາທິການການຕ່າງປະເທດ ສະພາແຫ່ງຊາດ ລາວ-ຫວຽດນາມ ຢູ່ແຂວງຮ່າຕິ່ງ ສສ.ຫວຽດນາມ; ບົດລາຍງານຜົນການຢ້ຽມຢາມ, ເຮັດວຽກ ແລະ ການຮ່ວມມືສອງຝ່າຍ ລາວ-ເບລາຣຸດ; ບົດລາຍງານແຜນການຕິດຕາມກວດກາ ແລະ ການລົງນາມຂໍ້ຕົກລົງຮ່ວມ ວ່າດ້ວຍການປະສານງານ ລະຫວ່າງ ກຳມາທິການວັດທະນະທຳ-ສັງຄົມກັບກະຊວງສາທາລະນະສຸກ; ລາຍງານກ່ຽວກັບເນື້ອໃນການແກ້ໄຂຜົນການກວດສອບແລະກວດກາ ຂອງອົງການກວດສອບແຫ່ງລັດ ແລະ ອົງການກວດກາແຫ່ງລັດ ທີ່ຈະນຳເຂົ້າລາຍງານໃນກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ, ອົງການກວດສອບແຫ່ງລັດ ແລະ ອົງການແຫ່ງລັດ; ບົດລາຍງານກ່ຽວກັບການຈັດຕັ້ງຜັນຂະຫຍາຍຕົວເລກ 9 ຄາດໝາຍ ຕາມມະຕິສະພາແຫ່ງຊາດ ສະບັບເລກທີ 082/ສພຊ, ລົງວັນທີ 30/12/2023; ບົດລາຍງານ ກ່ຽວກັບການແກ້ໄຂຜົນກະທົບຈາກໂຄງການທາງລົດໄຟ; ບົດລາຍງານການແກ້ໄຂບັນຫາໄຟໄໝ້ລາມປ່າ; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດ ວຽກງານສີ່ມອນຊົນຂອງສະພາແຫ່ງຊາດ ແລະ ການຍ້ອງຍໍຜູ້ມີຜົນງານດີເດັ່ນ ໃນການສ້າງຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ປະຈຳປີ 2022 ຂອງ ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ.

ການດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນ ເມສາ 2023 ໄດ້ຮັບຜົນສຳເລັດຕາມແຜນການທີ່ວາງໄວ້, ບັນຫາສຳຄັນຕ່າງໆທີ່ນຳມາພິຈາລະນາຢູ່ກອງປະຊຸມ ໄດ້ຜ່ານການຮັບຮອງ, ກາຍເປັນນິຕິກຳ ແລະ ເປັນບ່ອນອີງໃຫ້ພາກສ່ວນກ່ຽວຂ້ອງ ນຳໄປຈັດຕັ້ງປະຕິບັດ, ເຮັດໃຫ້ບັນຫາຕ່າງໆ ໄດ້ຮັບການປັບປຸງແກ້ໄຂໃຫ້ດີຂຶ້ນ.

(ສອນສັກ ວັນວິໄຊ)

## ວັນທີ 1...

(ຕໍ່ຈາກໜ້າ 1)

ທວງໃຫ້ພວກນາຍທຶນເພີ່ມເງິນເດືອນ ແລະ ຫຼຸດຜ່ອນຊົ່ວໂມງເຮັດວຽກລົງ ໂດຍໂຄ່ນລົ້ມລະບອບສັກດີນາ.

ຊົນຊັ້ນກຳມະກອນ ກໍຄືຊາວຜູ້ອອກແຮງງານລາວບັນດາເຜົ່າໃນທົ່ວປະເທດ ມີຄວາມປິຕິຊົມຊື່ນ ແລະ ເອກອ້າງທະນົງໃຈເປັນຢ່າງຍິ່ງ ທີ່ໄດ້ພ້ອມກັບຊົນຊັ້ນກຳມະກອນຊາວຜູ້ອອກແຮງງານໃນທົ່ວໂລກ ຈັດຕັ້ງສະເຫຼີມສະຫຼອງວັນກຳມະກອນສາກົນ ວັນທີ 1 ພຶດສະພາ ທີ່ໝູນວຽນມາອີກວາລະໜຶ່ງ ຄົບຮອບ 137 ປີ (1/5/1886-1/52023).

ສຳລັບການສະເຫຼີມສະຫຼອງວັນປະຫວັດສາດດັ່ງກ່າວ, ປີນີ້ ແມ່ນມີຄວາມໝາຍສຳຄັນຍິ່ງ ໃນພາລະກິດປະຕິວັດຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານລາວບັນດາເຜົ່າໃນທົ່ວປະເທດ ເຊິ່ງຈັດຂຶ້ນໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວລັດ, ທົ່ວກອງທັບ ແລະ ປວງຊົນລາວບັນດາເຜົ່າທັງຊາດ ພວມດຳເນີນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ຕິດພັນກັບ 2 ວາລະແຫ່ງຊາດ ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະບັນຫາຢາເສບຕິດ. ການກະກຽມກອງປະຊຸມກາງສະໄໝຂອງພັກ.

ວັນທີ 1 ພຶດສະພາ ປີ 1886 ຢູ່ປະເທດອາເມຣິກາ, ຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ ໄດ້ມີການຕໍ່ສູ້ສົມທົບກັບການຖະແຫຼງຄຳຮຽກຮ້ອງຢ່າງແຂງແຮງວ່າ: "ແຕ່ນີ້ຕໍ່ໄປຈະບໍ່ໃຫ້ກຳມະກອນຜູ້ໃດເຮັດວຽກເກີນ 8 ຊົ່ວໂມງຕໍ່ມື້, 8 ຊົ່ວໂມງເຮັດວຽກ, 8 ຊົ່ວໂມງພັກຜ່ອນ ແລະ 8 ຊົ່ວໂມງຮໍ່າຮຽນ".ໃນມື້ນັ້ນ ໄດ້ມີກຳມະກອນນັດຢຸດງານເຖິງ 5.000 ແຫ່ງ ໃນຕົວເມືອງໃຫຍ່ຂອງປະເທດອາເມຣິກາ ເຊິ່ງມີຜູ້ເຂົ້າຮ່ວມເຖິງ 3 ແສນກວ່າຄົນ ໂດຍໄດ້ຮຽກຮ້ອງ ແລະ ບັງຄັບໃຫ້ນາຍທຶນຕ້ອງຮັບຮອງເອົາສິດໃນການເຮັດວຽກຂອງກຳມະກອນ ໃນມື້ໜຶ່ງ 8 ຊົ່ວໂມງ. ເຫດການຂອງວັນທີ 1/5/1886 ໄດ້ສ້າງກະແສຟອງອັນໃຫຍ່ຫຼວງ ແລະ ແຂງແຮງ ເຖິງຂະບວນການກຳມະກອນຢູ່ທະວີບເອີຣົບ ແລະ ເປັນກຳລັງໃຈໃຫ້ຂະບວນຕໍ່ສູ້ຂອງກຳມະກອນໂລກ, ທັງເປັນບາດກ້າວຂະຫຍາຍຕົວແຫ່ງໄຊຊະນະ, ມີຄວາມໝາຍສຳຄັນຢ່າງໃຫຍ່ຫຼວງຂອງຊົນຊັ້ນກຳມະກອນ ໃນຂະບວນການຕໍ່ສູ້ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ.

ກອງປະຊຸມພັກກອມມູນິດສາກົນ ຄັ້ງທີ II ໄດ້ເປີດຂຶ້ນຢູ່ນະຄອນຫຼວງປາຣີ ປະເທດຝຣັ່ງ, ໃນວັນທີ 1 ເມສາ 1886 ກອງປະຊຸມໄດ້ຜ່ານໂຄງການດຳເນີນງານສຳຄັນຄື: ຊົນຊັ້ນກຳມະກອນສາກົນສາມັກຄີຕໍ່ສູ້ເພື່ອປະຕິບັດຄຳຂວັນ "ມື້ໜຶ່ງເຮັດວຽກ 8 ຊົ່ວໂມງ ແລະ ກຳນົດເອົາ ວັນທີ 1 ພຶດສະພາ ປີ 1886 ເປັນວັນກຳມະກອນສາກົນ" ນັບແຕ່ນັ້ນມາ ວັນທີ 1 ພຶດສະພາ ຂອງທຸກໆປີ ຈຶ່ງໄດ້ກາຍເປັນວັນບຸນໃຫຍ່ຂອງຊົນຊັ້ນກຳມະກອນ, ເປັນວັນລະນຶກເຖິງມູນເຊື້ອສາມັກຄີຕໍ່ສູ້ຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ ເພື່ອປົກປ້ອງສິດ ແລະ



ຜົນປະໂຫຍດຂອງຕົນ ປົກປັກຮັກສາສັນຕິພາບຂອງໂລກ.

ຊົນຊັ້ນກຳມະກອນ ສ້າງໄດ້ມູນເຊື້ອ ແລະ ລັກສະນະດີເລີດ. ທ່ານ ມາກ-ອັງແກນ ໄດ້ຢັ້ງຢືນວ່າ: "ມີແຕ່ຊົນຊັ້ນກຳມະກອນເທົ່ານັ້ນ ທີ່ມີຄວາມສາມາດລຶບລ້າງລະບອບທຶນນິຍົມແລ້ວສ້າງຕັ້ງລະບອບກອມມູນິດຂຶ້ນແທນ". ຍ້ອນວ່າຊົນຊັ້ນກຳມະກອນ ມີລັກສະນະດີເລີດຄື: ເປັນຊົນຊັ້ນທີ່ມີນ້ຳໃຈກ້າຫານ ຕໍ່ສູ້ຢ່າງເດັດດ່ຽວໜຽວແໜ້ນກວ່າໝູ່ ແລະ ມີມານະຈິດປະຕິວັດສູງສົ່ງ ສຸດກົກສຸດປາຍ, ເປັນຜູ້ທີ່ມີຄວາມດຸໝັ່ນຄົ້ນຄວ້າຮ່ຳຮຽນເອົາຄວາມຮູ້ວິທະຍາສາດເຕັກນິກນັບມື້ສູງຂຶ້ນເລື້ອຍໆ, ຈຶ່ງເປັນຊົນຊັ້ນທີ່ກ້າວໜ້າກວ່າໝູ່, ເປັນຊົນຊັ້ນທີ່ມີຄວາມສາມັກຄີເລິກເຊິ່ງ, ກວ້າງຂວາງ ແລະ ສາມັກຄີສາກົນຢ່າງຜ່ອງໃສ, ສາມາດດຶງດູດເອົາຫຼາຍຄົນເຂົ້າຮ່ວມໃນຂະບວນການປະຕິວັດໄດ້, ເປັນຊົນຊັ້ນທີ່ມີລະບຽບວິໄນເຂັ້ມງວດ, ເປັນຊົນຊັ້ນທີ່ມີສະຕິຕໍ່ການຈັດຕັ້ງສູງ ແລະ ຮູ້ປະສົມກົມກຽວ ລະຫວ່າງ ຜົນປະໂຫຍດສ່ວນບຸກຄົນ, ລວມໝູ່ ແລະ ຂອງຊາດ, ເປັນຊົນຊັ້ນທີ່ມີຄວາມມານະອົດທົນ, ມີຄວາມຕື່ນຕົວດ້ວຍຕົນເອງ, ເປັນຜູ້ທີ່ມີວິໄສທັດເບິ່ງກວ້າງມອງໄກໃນການຕີລາຄາບັນຫາ, ສັງລວມພຶດຕິກຳຕົວຈິງ ກາຍເປັນທິດສະດີຊີ້ນຳ.

ສຳລັບມູນເຊື້ອ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງຂະບວນການກຳມະກອນສາກົນ, ນັບແຕ່ວັນກຳມະກອນສາກົນເປັນຕົ້ນມາ, ຂະບວນການຕໍ່ສູ້ຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ ໃນບັນດາປະເທດນາຍທຶນ ແລະ ຫົວເມືອງຂຶ້ນ ໄດ້ກາຍເປັນກະແສຟອງຢ່າງຟົດເດືອດ ເປັນຕົ້ນແມ່ນພາຍຫຼັງການປະຕິວັດເດືອນຕຸລາຣັດເຊຍສຳເລັດຜົນ ແລະ ພາຍຫຼັງການກຳເນີດ "ສະພາແຮງງານສາກົນ", ຂະບວນກຳມະບານ ໄດ້ກຳເນີດເກີດຂຶ້ນ ແລະ ໄດ້ຂະຫຍາຍຕົວຮອດພາກພື້ນອາຊີ ແລະ ອາເມຣິກາລາຕິນ. ຫຼັງຈາກສົງຄາມໂລກຄັ້ງທີ II, ຂະບວນການກຳມະບານ ກໍໄດ້ແຜ່ລາມໄປຮອດອາຟຣິກາ ແລະ ການຕໍ່ສູ້ນັບມື້ນັບມີຫຼາຍຮູບຫຼາຍສີ.

ສຳລັບຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານລາວບັນດາເຜົ່າ ກໍໄດ້ເສີມຂະຫຍາຍນ້ຳໃຈ ວັນທີ 1 ພຶດສະພາ ໂດຍພາຍໃຕ້ການນຳພາຂອງພັກ ປປ ລາວ ເຊິ່ງເປັນພັກຂອງຊົນຊັ້ນກຳມະກອນທີ່ແທ້ຈິງ ໄດ້ຕໍ່ສູ້ຕ້ານການກົດຂີ່ຂູດຮີດຈາກພວກສັກດີນາ, ນາຍທຶນ, ພວກລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່ ດ້ວຍຫຼາຍຮູບການ ໂດຍໄດ້ຮັບໄຊຊະນະຕະຫຼອດມາ. ປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ, ສືບຕໍ່ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຢ່າງແຂງແຮງໜັກແໜ້ນ.

ພັກ ປປ ລາວ ກໍຄືປະເທດຊາດໄດ້ມອບໝາຍຄວາມຮັບຜິດຊອບທີ່ມີກຽດອັນສູງສົ່ງໃຫ້ອົງການກຳມະບານ ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານລາວ. ພ້ອມດຽວກັນນີ້, ອົງການກຳມະບານລາວ ໄດ້ຕັ້ງໜ້າປັບປຸງ ແລະ ຂະຫຍາຍການຈັດຕັ້ງຂອງຕົນໃນທຸກດ້ານໃຫ້ເຂັ້ມແຂງ, ເຄື່ອນໄຫວປຸກລະດົມຂົນຂວາຍມະຫາຊົນໃນທົ່ວປະເທດ ແລະ ສົມທົບກັບກຳລັງແຮງຂອງຍຸກສະໄໝຊົນຊັ້ນກຳມະຊີບສາກົນ, ສ້າງກຳລັງແຮງປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ກູ້ຊາດ ກໍຄືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຢ່າງແຂງແຮງ, ເຮັດໃຫ້ຊີວິດຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານລາວບັນດາເຜົ່າ ໄດ້ຮັບການປົວແປງດີຂຶ້ນເທື່ອລະກ້າວ, ຜົນສະທ້ອນອັນຊອບທຳໄດ້ຮັບການປົກປ້ອງບົນພື້ນຖານກົດໝາຍ.

ເນື່ອງໃນໂອກາດສະເຫຼີມສະຫຼອງວັນທີ 1 ພຶດສະພາ ຄົບຮອບ 137 ປີ, ປີນີ້ ຮຽກຮ້ອງມາຍັງຊົນຊັ້ນກຳມະກອນ ກໍຄືສະມາຊິກກຳມະບານ, ພະນັກງານ, ນັກຮຽນຮູ້ປັນຍາຊົນ, ກຳມະກອນຊາວຜູ້ອອກແຮງງານທຸກຖ້ວນໜ້າ ຈົ່ງພ້ອມກັນສຸມໃສ່ຍົກສູງຄຸນນະພາບຂອງວຽກງານສຶກສາອົບຮົມການເມືອງນຳພາແນວຄິດ, ເສີມຂະຫຍາຍປະຊາທິປະໄຕ ໃນຊີວິດຕົວຈິງຂອງສັງຄົມ ຕິດພັນກັບການເພີ່ມທະວີລະບຽບວິໄນ, ຊຸກຍູ້ການຜະລິດທຸລະກິດຢ່າງແຂງແຮງ ເຮັດໃຫ້ສະພາບເສດຖະກິດຂອງປະເທດເຮົາມີການຫັນປ່ຽນໃໝ່ຢ່າງຕັ້ງໜ້າ, ປຸກລະດົມມະຫາຊົນເຂົ້າຮ່ວມໃນວຽກງານປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ຍົກສູງນ້ຳໃຈເປັນເຈົ້າປະເທດຊາດ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ, ຕັ້ງໜ້າປະຕິບັດໜ້າທີ່ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ເດັດດ່ຽວສະກັດກັ້ນ ແລະ ຕ້ານກົນອຸບາຍແບ່ງແຍກ, ການໃສ່ຮ້າຍປ້າຍສີຂອງກຸ່ມຄົນບໍ່ຫວັງດີຢູ່ພາຍໃນ ແລະ ຕ່າງປະເທດ.

ໃນສະພາບການຂອງພາກພື້ນ ແລະ ຂອງໂລກ ຜັນແປຢ່າງສັບສົນ, ສະພາບເສດຖະກິດຫຍຸ້ງຍາກ ເປັນຕົ້ນ ຄ່າຄອງຊີບແພງ, ໄພເງິນເຟີ້, ລາຄານ້ຳມັນແພງ, ເງິນກີບອ່ອນຄ່າ ເຊິ່ງສິ່ງຜົນກະທົບໜັກຕໍ່ການດຳລົງຊີວິດຂອງທຸກຄົນໃນສັງຄົມ. ດັ່ງນັ້ນ, ອົງການກຳມະບານກໍຕ້ອງເສີມຂະຫຍາຍຄວາມເປັນເຈົ້າຕົນເອງໃຫ້ນັບມື້ດີຂຶ້ນ ໂດຍສະເພາະເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດ ໃຫ້ກຳມະກອນໃນການສືບຕໍ່ເສີມຂະຫຍາຍທາດແທ້, ລັກສະນະດີເລີດຂອງຊົນຊັ້ນກຳມະກອນ ແລະ ມູນເຊື້ອປະຕິວັດອັນດີງາມ, ປະຕິບັດສິດ ແລະ ພັນທະເຂົ້າໃນພາລະກິດປະຕິວັດໃນໄລຍະໃໝ່ຢ່າງຖືກຕ້ອງ.

ແດ່ນ້ຳໃຈວັນທີ 1 ພຶດສະພາ ໝັ້ນຍືນ!

# ການປູກມັນຕົ້ນຢູ່ແຂວງໄຊຍະບູລີ ມີທ່າອ່ຽງເພີ່ມຂຶ້ນໃນແຕ່ລະປີ



ໃນວັນທີ 30 ມີນາ ຜ່ານມາ, ທ່ານ ບຸດສະກອນ ອິນທະລັງສີ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງໄຊຍະບູລີ ໄດ້ໃຫ້ສຳພາດກັບສື່ມວນຊົນຂອງສະພາແຫ່ງຊາດ ກ່ຽວກັບວຽກງານກະສິກຳ ແລະ ປ່າໄມ້ຂອງແຂວງ ໂດຍເພາະແມ່ນການປູກມັນຕົ້ນຢູ່ແຂວງໄຊຍະບູລີ ເຊິ່ງທ່ານໄດ້ໃຫ້ຮູ້ກ່ຽວກັບຜົນໄດ້ ແລະ ຜົນເສຍຂອງການປູກມັນຕົ້ນ ແລະ ມາດຕະການຕ່າງໆທີ່ກ່ຽວຂ້ອງກັບການປູກມັນຕົ້ນ ວ່າ:

**+ ຜົນໄດ້:** ສຳລັບການປູກມັນຕົ້ນຢູ່ແຂວງໄຊຍະບູລີ ສັງເກດຈາກຕົວເລກສະຖິຕິການຜະລິດ ແມ່ນມີທ່າອ່ຽງຂະຫຍາຍ ແລະ ເພີ່ມຂຶ້ນ ປີ 2022 ມີເນື້ອທີ່ປູກມັນຕົ້ນ 58 ພັນກວ່າເຮັກຕາ ຄາດຄະເນປີ 2023 ຈະສູງເຖິງ 70 ພັນເຮັກຕາ, ສາເຫດການຜະລິດເພີ່ມຂຶ້ນ ກໍຍ້ອນແຂວງຂອງພວກເຮົາມີໂຮງງານຜະລິດແປ້ງມັນຕົ້ນຂະໜາດໃຫຍ່ 1 ແຫ່ງ ແລະ ລານຕາກແຫ້ງຂະໜາດໃຫຍ່ ຫຼາຍກວ່າ 30 ແຫ່ງ, ຄວາມຕ້ອງການຕະຫຼາດມັນຕົ້ນມີສູງ ລາຄາດີ ຈຶ່ງເຮັດໃຫ້ຊາວກະສິກອນຫັນມາປູກມັນຕົ້ນຫຼາຍຂຶ້ນ; ນອກນັ້ນ, ມັນຕົ້ນເປັນພືດທີ່ປູກ ແລະ ບົວລະບັດຮັກສາໄດ້ງ່າຍ ໃຫ້ຜົນຜະລິດດີ ໂດຍອີງຕາມການລົງສຳຫຼວດຂອງຄະນະທີມງານວິຊາການຂອງພະແນກ (ຂະແໜງປູກຝັງ) ໄດ້ເຮັດການສຶກສາ ແລະ ທົດລອງປູກມັນຕົ້ນໃນເນື້ອທີ່ 1 ເຮັກຕາ ສາມາດເກັບກູ້ຜົນຜະລິດໄດ້ 35-45 ໂຕນ/ເຮັກຕາ;

**+ ຜົນເສຍ:** ມັນຕົ້ນຈັດໃນພືດລົ້ມລຸກ ແຕ່ອາຍຸເວລາເກັບກ່ຽວຊ້າ ປະມານ 9-12 ເດືອນ, ມັນຕົ້ນເປັນພືດທີ່ມີຄວາມຕ້ອງການທາດອາຫານໃນດິນສູງ ສະນັ້ນ, ຖ້າເຮົາປູກຕິດຕໍ່ກັນໃນເນື້ອທີ່ດິນຕອນດຽວເປັນເວລາ 3-5 ປີ ຈະເຮັດໃຫ້ທາດອາຫານຢູ່ໃນດິນຄ່ອຍໝົດໄປ, ດິນເສື່ອມຄຸນນະພາບ, ສົ່ງຜົນຕໍ່ການປູກມັນຕົ້ນໃນລະດູການຕໍ່ໄປ ໂດຍສະເພາະ ບັນຫາການເສື່ອມໂຊມຂອງຄຸນນະພາບດິນ ແລະ ສະມັດຕະພາບຜົນຜະລິດຫຼຸດລົງ; ສ່ວນການບຸກເບີກ-ທຳລາຍປ່າໄມ້ ເພື່ອຂະຫຍາຍພື້ນທີ່ການປູກມັນຕົ້ນ ເປັນການທຳລາຍຊັບພະຍາກອນປ່າໄມ້, ການຫັນເອົາດິນປູກພືດສະບຽງ ແລະ ພືດເປັນສິນຄ້າຊະນິດອື່ນ ເພື່ອຂະຫຍາຍພື້ນທີ່ປູກມັນຕົ້ນ ເຮັດໃຫ້ການດຸນດ່ຽງພືດຊະນິດອື່ນບໍ່ພຽງພໍ, ສ້າງມົນລະພິດທາງອາກາດຈາກການຈູດປ່າເພື່ອເຮັດສວນມັນ, ບັນຫາການລະບາດຂອງພະຍາດແມງໄມ້ ສັດຕູພືດທີ່ມາຈາກການປູກມັນຕົ້ນ; ນອກນັ້ນ, ກໍອາດສົ່ງຜົນກະທົບຕໍ່ການປູກພືດຊະນິດອື່ນໃນລະດູການຕໍ່ໄປ.

ສຳລັບດິນທີ່ປູກມັນຕົ້ນແບບເຊີງດ່ຽວ ຫຼື ການປູກມັນຕົ້ນຊະນິດດຽວຕິດຕໍ່ກັນ 3 ປີຂຶ້ນໄປ ຈະເຮັດໃຫ້ດິນສູນເສຍຄວາມອຸດົມສົມບູນ (ດິນຈືດ) ເນື່ອງຈາກມັນຕົ້ນເປັນພືດທີ່ຕ້ອງການທາດອາຫານສູງ, ເຮັດໃຫ້ທາດອາຫານໃນດິນຄ່ອຍໆຫຼຸດລົງ ເພາະມັນຕົ້ນໃຊ້ທາດອາຫານຢູ່ໃນດິນມາສ້າງຫົວ, ສ້າງແປ້ງ ແລະ ອີກບັນຫາໜຶ່ງ ການໄຖໜ້າດິນເຮັດໃຫ້ດິນຖືກເຊາະລ້າງໄດ້ງ່າຍ ໂດຍສະເພາະໜ້າຝົນ ຈະເຮັດໃຫ້ດິນເຊາະເຈື່ອນ ລວມທັງການເຊາະລ້າງອິນຊີວັດຖຸໃນດິນໄປພ້ອມ ຍິ່ງເຮັດໃຫ້ດິນເສື່ອມຄຸນນະພາບໄວຂຶ້ນ ແລະ ຕໍ່ກັບຂະບວນການປູກມັນຕົ້ນທີ່ເຫັນວ່າ: ມີທ່າອ່ຽງນັບມື້ນັບມີການຂະຫຍາຍຕົວເພີ່ມຂຶ້ນໃນທຸກໆປີນັ້ນ ແຕ່ສິ່ງທີ່ຕາມມາແມ່ນສິ່ງຜົນກະທົບໂດຍກົງຕໍ່ການບຸກລຸກທີ່ດິນປ່າໄມ້ໃນສາມປະເພດປ່າ ເນື່ອງຈາກວ່າການປູກມັນຕົ້ນມັນສາມາດສ້າງລາຍຮັບໃຫ້ແກ່ປະຊາຊົນເປັນຈຳນວນຫຼາຍ ແລະ ມີລາຍຮັບສູງກ່ວາການປູກພືດຊະນິດອື່ນໆ ກົງກັນຂ້າມ ທີ່ດິນກະສິກຳທີ່ລັດຈັດສັນໃຫ້ຄອບຄົວນຳໃຊ້ເຂົ້າໃນການຜະລິດສະບຽງອາຫານແມ່ນບໍ່ພຽງພໍກັບຄວາມຕ້ອງການຂອງຄອບຄົວ ເພາະການປູກມັນຕົ້ນແມ່ນປູກເປັນສິນຄ້າ, ປະຊາຊົນມີຄວາມຕ້ອງການທີ່ດິນຫຼາຍ ຈຶ່ງໄດ້ມີການຂະຫຍາຍພື້ນທີ່ການຜະລິດເຂົ້າໄປຫາເນື້ອທີ່ດິນສາມປະເພດປ່າ ນັບທັງປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດແມ່ນຖືກປະຊາຊົນບຸກລຸກເປັນຈຳນວນຫຼວງຫຼາຍໃນແຕ່ລະປີ, ນອກຈາກການບຸກລຸກທີ່ດິນປ່າໄມ້ເຂົ້າໃນການປູກມັນຕົ້ນແລ້ວ ປະຊາຊົນຈຳນວນໜຶ່ງຍັງຫັນໄປເອົາເນື້ອທີ່ຄັງລ້ຽງສັດ ແລະ ປ່າປູກໄມ້ສັກມາເປັນສວນປູກມັນຕົ້ນ ດ້ວຍການຂາຍສັດອອກ, ໄຖຫຍ້າຖິ້ມ ແລະ ຕັດໄມ້ສັກອອກ ເພື່ອໄຖປູກມັນຕົ້ນ.

ພ້ອມນັ້ນ, ທ່ານຍັງໃຫ້ຮູ້ຕື່ມອີກວ່າ: ໄລຍະຜ່ານມາ ພະແນກກະສິກຳ ແລະ ປ່າໄມ້ແຂວງ ໄດ້ມີມາດຕະການຕ່າງໆໃນການຄຸ້ມຄອງການປູກມັນຕົ້ນ ເປັນຕົ້ນ ການຜັນຂະຫຍາຍບັນດາແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ, ດຳລັດ, ລະບຽບການ, ແລະ ນິຕິກຳຕ່າງໆ ກ່ຽວກັບການຄຸ້ມຄອງປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້-ທີ່ດິນປ່າໄມ້ ຢ່າງເປັນປົກກະຕິຕະຫຼອດມາ. ໂດຍສະເພາະ ມະຕິເລກທີ 026 ຂອງຄະນະບໍລິຫານງານສູນກາງພັກ ສະບັບລົງວັນທີ 03 ສິງຫາ 2017 ແລະ ມະຕິຂອງສະພາແຫ່ງຊາດ ສະບັບເລກທີ 098 ລົງວັນທີ 28 ມິຖຸນາ 2018 ດ້ວຍການຮັກສາເນື້ອທີ່ດິນປ່າໄມ້ ໃນ 3 ປະເພດປ່າ ຫຼື ເອີ້ນວ່າເຂດສະຫງວນ, ເຂດອະນຸລັກຊັບພະຍາກອນທຳມະຊາດ ໃຫ້ໄດ້ຢ່າງໜ້ອຍ 70%, ເນື້ອທີ່ດິນທີ່ຈະນຳໃຊ້ ຫຼື ເອີ້ນວ່າເຂດທີ່ຢູ່ອາໄສ, ເຂດທຳການຜະລິດ ແລະ ພັດທະນາພື້ນຖານໂຄງລ່າງ ບໍ່ໃຫ້ເກີນ 30% ຂອງເນື້ອທີ່ທົ່ວປະເທດ ຕາມແຜນແມ່ບົດຈັດສັນທີ່ດິນແຫ່ງຊາດໄດ້ກຳນົດໄວ້. ໂດຍການຜັນຂະຫຍາຍບັນດາກົດໝາຍ, ນິຕິກຳຈາກຂັ້ນສູນກາງມາເປັນຂອງເຈົ້າແຂວງ, ຂອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຕົ້ນ ຄຳແນະນຳຂອງທ່ານເຈົ້າແຂວງ ສະບັບເລກທີ 264/ຈຂ.ຊຍ, ລົງວັນທີ 21 ພະຈິກ 2019, ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້; ແຈ້ງການຂອງທ່ານເຈົ້າແຂວງ ສະບັບເລກທີ 154/ຈຂ.ຊຍ, ລົງວັນທີ 15 ທັນວາ 2022 ວ່າດ້ວຍການຄຸ້ມຄອງການຖາງປ່າເຮັດໄຮ່, ການຕ້ານໄຟໄໝ້ລາມປ່າ ແລະ ການປົກປັກຮັກສາປ່າໄມ້, ສັດນ້ຳ ແລະ ສັດປ່າໃນຂອບເຂດທົ່ວແຂວງ; ແຈ້ງການຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ສະບັບເລກທີ 3599/ກປຂ.ຊຍ, ລົງວັນທີ 26 ຕຸລາ 2021 ວ່າດ້ວຍການໃຫ້ຢຸດຕິການອອກໜັງສືຢັ້ງຢືນການນຳໃຊ້ທີ່ດິນປ່າໄມ້ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຢູ່ໃນເຂດທີ່ດິນປ່າສະຫງວນ, ທີ່ດິນປ່າປ້ອງກັນ



ແລະ ທີ່ດິນປ່າຜະລິດໃນຂອບເຂດທົ່ວແຂວງ ແລະ ໂອກາດສານອື່ນໆອີກຈຳນວນໜຶ່ງ ເຊິ່ງປີຜ່ານມາ ທົ່ວແຂວງສາມາດເຜີຍແຜ່ນິຕິກຳຕ່າງໆທີ່ກ່າວມາຂ້າງເທິງຢູ່ຂັ້ນບ້ານໄດ້630ຄັ້ງ, ມີຜູ້ເຂົ້າຮ່ວມ 35.312 ເທື່ອຄົນ, ຍິງ 19.352 ເທື່ອຄົນ.

ໃນຕອນທ້າຍ, ທ່ານ ບຸດສະກອນ ອິນທະລັງສີ ຍັງໄດ້ຝາກເຖິງພໍ່ແມ່ປະຊາຊົນທີ່ປູກຝັງມັນຕົ້ນ ຄວນເອົາໃຈໃສ່ບັນຫາຄື:

1) ສິ່ງທີ່ຄວນເອົາໃຈໃສ່ສຳລັບຊາວກະສິກອນໃນເມື່ອມີການປູກແລ້ວ ໃຫ້ຕິດຕາມກວດກາ ແລະ ເຝົ້າລະວັງພະຍາດແມງໄມ້ສັດຕູພືດທີ່ອາດສົ່ງຜົນກະທົບຕໍ່ການໃຫ້ຜົນຜະລິດມັນຕົ້ນ ເຊັ່ນ: ພະຍາດເຫົ້ງາເນົ່າ, ພະຍາດຝອຍຂົນໄກ່, ພະຍາດໃບໄໝ້, ພະຍາດໃບດ່າງຂອງມັນຕົ້ນ ແລະ ແມງໄມ້ ໄດ້ແກ່: ເພ້ຍແປ້ງສີບົວ, ໄຮແດງ ແລະ ແມງວີຂາວ ທີ່ອາດຈະເກີດຂຶ້ນ, ໃຫ້ເອົາໃຈໃສ່ເປັນພິເສດແມ່ນພະຍາດໃບດ່າງ ແລະ ພະຍາດເຫງົ້າເນົ່າ ເຊິ່ງເປັນພະຍາດພືດຕ້ອງຫ້າມຂອງປະເທດປາຍທາງເຊັ່ນ: ສປ ຈີນ ແລະ ໄທ ຖ້າຫາກພົບເຫັນ ຄວນແຈ້ງພະນັກງານວິຊາການສະເພາະດ້ານ ຫຼື ທຳລາຍ ເພື່ອບໍ່ມີການແຜ່ລະບາດເປັນວົງກວ້າງ.

2) ບໍ່ຄວນຂະຫຍາຍພື້ນທີ່ການຜະລິດມັນຕົ້ນຕື່ມອີກ ໂດຍສະເພາະ ການບຸກລຸກພື້ນທີ່ເຂດ 3 ປະເພດປ່າ ເພາະຈະສົ່ງຜົນກະທົບຂອງມົນລະພິດທີ່ຮ້າຍແຮງຕໍ່ສຸຂະພາບຄົນ, ສັດ ແລະ ສິ່ງແວດລ້ອມໃນໄລຍະສະເພາະໜ້າ ແລະ ຍາວນານ;

3) ຄວນປູກພືດຊະນິດອື່ນສະຫຼັບກັນ ຫຼື ປູກພືດໝູນວຽນ ເພື່ອຟື້ນຟູ ແລະ ປັບປຸງຄຸນນະພາບຂອງດິນ ແນໃສ່ເພື່ອຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ ໃຫ້ເກີດປະໂຫຍດສູງສຸດ ແລະ ຍາວນານ;

4) ດິນທີ່ມີຄວາມຄ້ອຍຊັນເກີນ 35 ອົງສາຂຶ້ນໄປ ຄວນຫັນໄປປູກພືດຊະນິດອື່ນ ໂດຍສະເພາະພືດຢືນຕົ້ນ ເພື່ອຮັບປະກັນການເກີດຄວາມສ່ຽງຈາກຜົນກະທົບໄພພິບັດໃນໄລຍະລະດູຝົນ.



## ປະທານ...

(ຕໍ່ຈາກໜ້າ 1)

ສປປລາວ ພ້ອມດ້ວຍຄະນະ.

ໂອກາດດັ່ງກ່າວ, ທັງສອງຝ່າຍ ໄດ້ມີການປຶກສາຫາລືຮ່ວມກັນກ່ຽວກັບການສ້າງຕັ້ງກຸ່ມມິດຕະພາບລັດຖະສະພາລາວ-ອີຢູ ແລະ ຄວາມເປັນໄປໄດ້ໃນການສ້າງສາຍພົວພັນມິດຕະພາບ ດ້ວຍການເດີນທາງຢ້ຽມຢາມເຊິ່ງກັນແລະກັນລະຫວ່າງສອງຝ່າຍໃນອະນາຄົດ; ພ້ອມດຽວກັນນັ້ນ, ຍັງໄດ້ປຶກສາຫາລືວຽກງານກ່ຽວກັບການຍົກສູງການຮ່ວມມືທາງດ້ານເສດຖະກິດ-ການຄ້າ ແລະ ການລົງທຶນໃຫ້ຫຼາຍຂຶ້ນໂດຍສົມຄູ່ກັບການພົວພັນຮ່ວມມືທີ່ທັງສອງຝ່າຍໃຫ້ຄວາມສົນໃຈໃນຂົງເຂດການຕ່າງປະເທດ, ກະສິກຳ, ການສຶກສາ ແລະ ການສ້າງສາຍພົວພັນຮ່ວມມືລະຫວ່າງສອງຝ່າຍໃຫ້ນັບມື້ແໜ້ນແຟ້ນ ແລະ ດີຂຶ້ນເລື້ອຍໆ.

(ນາງ ປາກາລັກ ພົມມີໄຊ)

# ແລກປ່ຽນບົດຮຽນ ລະຫວ່າງ 2 ສະພາປະຊາຊົນແຂວງ ສາລະວັນ-ກວາງຈິ

(ສພຊ) ກອງປະຊຸມພົບປະແລກປ່ຽນບົດຮຽນ ລະຫວ່າງສະພາປະຊາຊົນແຂວງສາລະວັນ ກັບສະພາປະຊາຊົນແຂວງກວາງຈິ ສສ.ຫວຽດນາມ ໄດ້ເປີດຂຶ້ນຢ່າງເປັນທາງການໃນວັນທີ 4 ເມສາ 2023 ເຊິ່ງຝ່າຍຄະນະຜູ້ແທນສະພາປະຊາຊົນແຂວງສາລະວັນ ນໍາໂດຍສະຫາຍ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍບັນດາທ່ານຄະນະປະຈໍາ, ຄະນະກໍາມະການ, ຄະນະເລຂາທິການ, ສະມາຊິກສະພາປະຊາຊົນແຂວງ; ຝ່າຍຄະນະຜູ້ແທນສະພາປະຊາຊົນແຂວງກວາງຈິ ສສ.ຫວຽດນາມ ນໍາໂດຍສະຫາຍ ເລ ກວາງ ຈ໋ຽນ ກໍາມະການຄະນະປະຈໍາພັກແຂວງ, ຮອງປະທານຜູ້ປະຈໍາການສະພາປະຊາຊົນແຂວງກວາງຈິ ສສ.ຫວຽດນາມ ພ້ອມດ້ວຍຄະນະ ເຂົ້າຮ່ວມມີພະແນກການຂອງແຂວງສາລະວັນ ແລະ ພະນັກງານ-ລັດຖະກອນສະພາປະຊາຊົນແຂວງ.



ໃນໂອກາດນີ້, ສະຫາຍ ສີເຮັງ ຫອມສົມບັດ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຂອງຄະນະຜູ້ແທນສະພາປະຊາຊົນແຂວງກວາງຈິໃນຄັ້ງນີ້ ຖືເປັນຂີດໝາຍສໍາຄັນທີ່ສະແດງເຖິງການຮັດແໜ້ນຄວາມສາມັກຄີທີ່ມີມູນເຊື້ອອັນຍາວນານລະຫວ່າງສອງພັກ-ສອງລັດ ກໍຄືສອງຊາດລາວ-ຫວຽດນາມເວົ້າລວມ ເວົ້າສະເພາະກໍຄືສະພາປະຊາຊົນແຂວງສາລະວັນ ກັບສະພາປະຊາຊົນແຂວງກວາງຈິ ສສ.ຫວຽດນາມ ຕາມບົດບັນທຶກຊ່ວຍຈໍາທີ່ໄດ້ບັນທຶກຮ່ວມກັນໃນປີ 2017. ພ້ອມນັ້ນ, ສະຫາຍ ຂັນໄຊ ລັດຖະເຮົ້າ ຮອງປະທານສະພາປະຊາຊົນແຂວງສາລະວັນ ໄດ້ລາຍງານໂດຍຫຍໍ້ກ່ຽວກັບສະພາບລວມຂອງແຂວງສາລະວັນແລະລາຍງານວຽກງານຂອງສະພາປະຊາຊົນແຂວງຈໍານວນໜຶ່ງ.

ສະຫາຍ ເລ ກວາງ ຈ໋ຽນ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນຕໍ່ການມາຢ້ຽມຢາມ ແລະ ແລກປ່ຽນບົດຮຽນໃນຄັ້ງນີ້ ທັງໄດ້ລາຍງານໂດຍຫຍໍ້ກ່ຽວກັບສະພາບລວມຂອງແຂວງກວາງຈິ ແລະ ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງກວາງຈິ ໃຫ້ສະພາປະຊາຊົນແຂວງສາລະວັນຮັບຊາບ. ນອກຈາກນັ້ນ, ທັງສອງຝ່າຍກໍໄດ້ແລກປ່ຽນບົດຮຽນໃນຫົວຂໍ້ຕ່າງໆທີ່ມີຄວາມສົນໃຈຕື່ມອີກ.

ໂອກາດດຽວກັນນີ້, ທັງສອງຝ່າຍໄດ້ລົງນາມ ແລະ ເຊັນບົດບັນທຶກຄວາມຊົງຈໍາຮ່ວມກັນ ເຊິ່ງຝ່າຍລາວ ລົງນາມໂດຍສະຫາຍ ສີເຮັງ ຫອມສົມບັດ ແລະ ຝ່າຍຫວຽດນາມແມ່ນສະຫາຍ ເລ ກວາງ ຈ໋ຽນ ໂດຍເນື້ອໃນສໍາຄັນຂອງບົດບັນທຶກຄັ້ງນີ້ ທັງສອງຝ່າຍໄດ້ຕົກລົງເຫັນດີເປັນເອກະພາບກັນກ່ຽວກັບເນື້ອໃນບົດບັນທຶກຄວາມຊົງຈໍາວ່າ ການມາຢ້ຽມຢາມ, ເຮັດວຽກຂອງຄະນະປະຈໍາສະພາປະຊາຊົນແຂວງກວາງຈິໃນຄັ້ງນີ້ ແມ່ນໄດ້ປະກອບສ່ວນຮັດແໜ້ນສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລາວ-ຫວຽດນາມ, ຫວຽດນາມ-ລາວ ເວົ້າລວມ ເວົ້າສະເພາະລະຫວ່າງການນໍາ ແລະ ປະຊາຊົນຂອງສອງແຂວງສາລະວັນ-ກວາງຈິ; ເປັນການເຄື່ອນໄຫວແນໃສ່ຜັນຂະຫຍາຍບັນດາເນື້ອໃນບົດບັນທຶກຄວາມຊົງຈໍາລະຫວ່າງສະພາປະຊາຊົນແຂວງສາລະວັນ ກັບສະພາປະຊາຊົນແຂວງກວາງຈິ ສສ.ຫວຽດນາມໃນປີຜ່ານມາ, ການສະເຫຼີມສະຫຼອງວັນເຊັນສົນທິສັນຍາມິດຕະພາບ, ການຮ່ວມມືຮອບດ້ານລາວ-ຫວຽດນາມ ຄົບຮອບ 46 ປີ (18/7/1977-18/7/2023) ແລະ ວັນສ້າງຕັ້ງສາຍພົວພັນການທູດລາວ-ຫວຽດນາມຄົບຮອບ 61 ປີ (5/9/1962-5/9/2023); ບົນພື້ນຖານນໍ້າໃຈສາມັກຄີ, ໄວ້ເນື້ອເຊື່ອໃຈເຊິ່ງກັນແລະກັນ ຄະນະປະຈໍາສະພາປະຊາຊົນສອງແຂວງສາລະວັນ-ກວາງຈິ ໄດ້ແລກປ່ຽນຂໍ້ມູນ, ຕົ້ນຕໍແມ່ນກ່ຽວກັບສະພາບການຈັດຕັ້ງເຄື່ອນໄຫວວຽກງານຂອງສອງສະພາປະຊາຊົນແຂວງ, ແລກປ່ຽນບາງປະສົບການເຄື່ອນໄຫວຂອງຄະນະປະຈໍາສະພາ, ບັນດາຄະນະກໍາມະການ, ຄະນະເລຂາທິການສະພາປະຊາຊົນແຂວງ, ແນໃສ່ປະກອບສ່ວນຍົກສູງຄວາມອາດສາມາດ ແລະ ປະສິດທິພາບໃນການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຕ່ລະແຂວງໃນຕໍ່ໜ້າ; ສືບຕໍ່ລາຍງານໃຫ້ກັນຊາບກ່ຽວກັບສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະພາປະຊາຊົນສອງແຂວງ ສາລະວັນ-ກວາງຈິໃນຕໍ່ໜ້າ, ແນໃສ່ເປັນພື້ນຖານໃຫ້ແກ່ສອງຝ່າຍໃນການແລກປ່ຽນບົດຮຽນດ້ານວຽກງານວິຊາສະເພາະ ແລະ ຍົກສູງຜົນສໍາເລັດຂອງການຮ່ວມມືໃນຕໍ່ໜ້າ; ສອງຝ່າຍເຫັນດີເປັນເອກະພາບຜັດປ່ຽນກັນເປັນເຈົ້າພາບຈັດພິທີພົບປະແລກປ່ຽນບົດຮຽນ 2 ປີ/ຄັ້ງ. ນອກນັ້ນ, ສອງຝ່າຍຍັງສາມາດຈັດຕັ້ງການຢ້ຽມຢາມ ແລະ ເຮັດວຽກຢ່າງບໍ່ເປັນທາງການ ໃນກໍລະນີມີຄວາມຈໍາເປັນ.

ໃນການພົບປະຄັ້ງນີ້ ສະພາປະຊາຊົນແຂວງກວາງຈິ ຍັງໄດ້ມອບເງິນສົດ ຈໍານວນ 100 ລ້ານດົງ ໃຫ້ສະພາປະຊາຊົນແຂວງສາລະວັນ ເພື່ອໝູນໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງອີກດ້ວຍ.

(ນາງ ຄັດສອນ ຮຸ່ງສະຫວ່າງ ແລະ ທ່ານ ດີລໍາພົນ ພົມມະຈັນ)

# ສໍາເລັດການພົບປະ ແລະ ເຜີຍແຜ່ຜົນສໍາເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4



(ສພຊ) ເພື່ອປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາປະຊາຊົນແຂວງ ໃນນາມເປັນຕົວແທນຂອງປະຊາຊົນບັນດາເຜົ່າ, ໃນລະຫວ່າງວັນທີ 27-31 ມີນາ 2023 ທ່ານ ຄໍາເຜີຍ ງອນວັນຄໍາ ຮອງປະທານສະພາປະຊາຊົນແຂວງອຸດົມໄຊ ແລະ ທ່ານ ນາງ ແສງອາລຸນ ປັນຍາລໍ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງນາໝໍ້ ແຂວງອຸດົມໄຊ ໄດ້ເຄື່ອນໄຫວພົບປະພົນລະເມືອງຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສໍາເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ II ທີ່ເມືອງນາໝໍ້ ແຂວງອຸດົມໄຊ ໄດ້ 10 ຈຸດຄື: ສະໂມສອນຫ້ອງວ່າການເມືອງ, ບ້ານຫ້ວຍຊອຍ, ບ້ານປາງສາ, ບ້ານຈອມແສນ, ບ້ານພູລີ, ບ້ານແສນໄຊ, ບ້ານພູຕູມ, ບ້ານຫ້ວຍທີກ, ບ້ານມູນຕືນ ແລະ ບ້ານນໍ້າກໍ້ ມີຜູ້ເຂົ້າຮ່ວມຮັບທັງໝົດ 693 ຄົນ ຍິງ 289 ຄົນ.

ການເຄື່ອນໄຫວຄັ້ງນີ້, ເພື່ອຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນຈິດໃຈຜົນສໍາເລັດຂອງສອງກອງປະຊຸມໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈ ທັງໄດ້ຮັບຟັງການລາຍງານສະພາບລວມໂດຍຫຍໍ້ຂອງອົງການປົກຄອງບ້ານແຕ່ລະບ້ານ. ພ້ອມນີ້, ຍັງໄດ້ຮັບຟັງຄໍາຄິດຄໍາເຫັນ, ຄໍາສະເໜີຂອງປະຊາຊົນ ເຊິ່ງບັນດາຄໍາສະເໜີສ່ວນຫຼາຍ ແມ່ນວຽກງານການພັດທະນາ ແລະ ປັບປຸງພື້ນຖານໂຄງລ່າງ ເປັນຕົ້ນແມ່ນບັນຫາເສັ້ນທາງເປ່ເພ, ລະບົບນໍ້າລິນ-ນໍ້າໃຊ້, ການຂະຫຍາຍສັນສານໂທລະສັບ,ການຂະຫຍາຍຕາຄ່າຍໄຟຟ້າ,ປັບປຸງກໍ່ສ້າງອາຄານຮຽນ, ການປູກ-ການລ້ຽງ (ບ່ອນທໍາການຜະລິດ), ບັນຫາປາກົດການຫຍໍ້ທໍ້ຕ່າງໆ, ການຕັດໄມ້-ຖາງປ່າ ແລະ ບັນຫາອື່ນໆ ທີ່ຕິດພັນກັບຊີວິດປະຈໍາວັນຂອງປະຊາຊົນ, ບັນດາຄໍາສະເໜີດັ່ງກ່າວສະມາຊິກສະພາປະຊາຊົນແຂວງກໍໄດ້ອະທິບາຍ, ຊີ້ແຈງບາງບັນຫາກັບທີ່ ແລະ ໄດ້ສັງລວມເພື່ອຈະນໍາເອົາຂໍ້ສະເໜີໄປປຶກສາຫາລືກັນ ແລ້ວນໍາສິ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂຕາມພາລະບົດບາດ ແລະ ທັນກັບເວລາ.

ການເຄື່ອນໄຫວໃນຄັ້ງນີ້, ທ່ານ ຄໍາເຜີຍ ງອນວັນຄໍາ ໄດ້ມີຄໍາຄິດຄໍາເຫັນໂອ້ລົມຕໍ່ພໍ່ແມ່ປະຊາຊົນ ໂດຍທ່ານໄດ້ສະແດງຄວາມຊົມເຊີຍຕໍ່ອົງການປົກຄອງ ທີ່ໄດ້ເອົາໃຈໃສ່ຕໍ່ໜ້າທີ່ຄວາມຮັບຜິດຊອບ, ປະກອບສ່ວນໃນການປົກປັກຮັກສາ, ພັດທະນາບ້ານ ກໍຄືການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນເປັນກ້າວໆ; ພ້ອມກັນ, ຍັງໄດ້ເນັ້ນໜັກໃຫ້ອົງການປົກຄອງບ້ານ, ພໍ່ແມ່ປະຊາຊົນ ເພີ່ມທະວີຄວາມສາມັກຄີລະຫວ່າງຄະນະບ້ານກັບປະຊາຊົນ, ເປັນເຈົ້າໃນການພັດທະນາບ້ານ ໂດຍສະເພາະແມ່ນການປູກການລ້ຽງເປັນສິນຄ້າ, ຮັບປະກັນຄວາມສະຫງົບສຸກ, ວຽກງານການສຶກສາ, ວຽກງານສອງວາລະແຫ່ງຊາດ, ວຽກງານສາທາລະນະສຸກ ເຝົ້າລະວັງການແຜ່ລະບາດຂອງພະຍາດຕ່າງໆ, ຊ່ວຍກັນການປົກປັກຮັກສາແຫຼ່ງນໍ້າ, ການຕັດໄມ້-ຖາງປ່າຊະຊາຍ ແລະ ວຽກງານອື່ນໆ.

(ສີແຫວງ ສີບຸນເຮືອງ)



## ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນ 4 ຢູ່ 5 ບ້ານທີ່ເມືອງລະມາມ



(ສພຊ) ນັບແຕ່ 31 ມີນາ-6 ເມສາ 2023 ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 16 ພ້ອມດ້ວຍຄະນະ ສສຂ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຢູ່ 5 ບ້ານ ຄື: ບ້ານແກ້ງຫຼວງ, ບ້ານລະວີນ້ອຍ, ບ້ານນາວາ, ບ້ານໂນນໜອງຫວ້າ ແລະ ບ້ານໜອງບົງ ເຊິ່ງນຳຄະນະໂດຍທ່ານ ນາງ ໄຣມະນີ ວົງໜໍ່ແກ້ວ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16 ທັງເປັນປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ມີທ່ານ ໄຊຍະຫວັດ ກ້ອນຄຳໝັ້ນ ຄະນະປະຈຳພັກເມືອງ, ຫົວໜ້າໜ່ວຍສະມາຊິກສະພາປະຊາຊົນແຂວງປະຈຳເມືອງລະມາມ ແລະ ທ່ານ ຄອນສະຫວັນ ໄຊຍະສິມພອນ ສສຂ ປະຈຳເມືອງລະມາມ ໂດຍໃຫ້ການຕ້ອນຮັບຈາກການປົກຄອງບ້ານ-ພໍ່ແມ່ປະຊາຊົນຢ່າງອົບອຸ່ນ ແລະ ພ້ອມພຽງ.

ການເຄື່ອນໄຫວຄັ້ງນີ້ເພື່ອຜັນຂະຫຍາຍເຜີຍແຜ່ບັນດາເອກະສານ, ມະຕິຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາທັງ 2 ຂັ້ນ, ເພື່ອພົບປະຢ້ຽມຢາມຖາມຂ່າວ ພ້ອມຮັບຟັງການລາຍງານ, ຄຳສະເໜີຂອງການປົກຄອງບ້ານ ກໍຄືຂອງພໍ່ແມ່ປະຊາຊົນ ທັງ 5 ບ້ານ ເຊິ່ງບັນຫາອັນຕົ້ນຕໍແມ່ນກ່ຽວກັບການຂໍເພີ່ມເງິນອຸດໜູນໃຫ້ແກ່ຄະນະບ້ານ, ບັນຫານ້ຳໃຊ້ບໍ່ພຽງພໍ,ສະເໜີການເຮັດປ້າຍເຂົ້າບ້ານ-ປ້າຍຫ້ອງການບ້ານ, ການຈັດຜັງບ້ານໃຫ້ເປັນລະບຽບ, ການນຳເອົາເຄືອຂ່າຍໂທລະສັບ-ລະບົບໂທລະໂຄ່ງເຂົ້າຫາບ້ານ, ການປັບປຸງຄອງຊີບລະປະທານເພື່ອຕອບສະໜອງຕໍ່ການພັດທະນາເສດຖະກິດຂອງບ້ານ ກໍຄືຂອງຄອບຄົວໃຫ້ດີຂຶ້ນ. ຕໍ່ກັບຄຳສະເໜີດັ່ງກ່າວ ຄະນະ ສສຊ ແລະ ສສຂ ກໍໄດ້ຊີ້ແຈງບາງບັນຫາໃຫ້ແກ່ປະຊາຊົນໄດ້ຮັບຮູ້-ເຂົ້າໃຈກະຈ່າງແຈ້ງ ພ້ອມໄດ້ນຳເອົາຄຳສະເໜີຄວາມຕ້ອງການອັນຈຳເປັນຂອງພໍ່ແມ່ປະຊາຊົນເພື່ອໄປຄົ້ນຄວ້າຊຸກຍູ້ພະແນກການກ່ຽວຂ້ອງໃຫ້ຮັບຮູ້ ແລະ ແກ້ໄຂຕາມຄວາມເໝາະສົມ. ພ້ອມນີ້, ຄະນະ ສສຊ ແລະ ສສຂ ກໍໄດ້ຖືໂອກາດມອບອຸປະກອນການຮຽນ, ເຄື່ອງນຸ່ງຫົ່ມ, ເຂົ້າສານ, ເຄື່ອງກິລາປະເພດບານສົ່ງ-ບານເຕະ-ກະຕໍ້ ໃຫ້ແກ່ບ້ານທັງ 5 ບ້ານ.

(ນາງ ສຸກກະສັນ ບົວລະພາ)

## ຮອງປະທານ ສພຂ ຫົວພັນ ຕິດຕາມກວດກາ ການຈັດຕັ້ງປະຕິບັດໂຄງການຊົນລະປະທານ

(ສພຊ) ໃນວັນທີ 16-17 ມີນາ 2023 ທ່ານ ຄອນປະພັນ ເລືອງສີຈັນທອງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ, ຮອງປະທານສະພາປະຊາຊົນແຂວງຫົວພັນ ພ້ອມດ້ວຍຄະນະທີມງານພະແນກກະສິກຳ ແລະ ປ່າໄມ້ແຂວງຫົວພັນ ໄດ້ເຄື່ອນໄຫວຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການຊົນລະປະທານນ້ຳຂວ້າງ ເມືອງກວັນ ແລະ ໂຄງການຊົນລະປະທານພຽງຈະອ່າຍ ເມືອງຊຳໃຕ້ ແຂວງຫົວພັນ.



ການຊຸກຍູ້ຕິດຕາມກວດກາຄັ້ງນີ້ ແມ່ນປະຕິບັດຕາມສິດ, ພາລະບົດບາດຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງ ແລະ ແຜນການເຄື່ອນໄຫວຂອງຄະນະປະຈຳສະພາປະຊາຊົນແຂວງຫົວພັນ ໂດຍສຸມໃສ່ຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ ແລະ ການເງິນຂອງແຂວງ ໃຫ້ເປັນຂະບວນການຟົດຟື້ນ,ແຂງແຮງ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດແຜນພັດທະນາຂົງເຂດກະສິກຳ ແລະ ປ່າໄມ້ ເຫັນວ່າບາງດ້ານຍັງປະເຊີນໜ້າກັບສິ່ງທ້າທາຍຫຼາຍດ້ານ ໂດຍສະເພາະໂຄງການຊົນລະປະທານ ເພື່ອສະໜອງນ້ຳໃຫ້ພຽງພໍກັບການຜະລິດຂອງປະຊາຊົນ, ຮັບປະກັນສະບຽງອາຫານ.

ຕອນທ້າຍ, ຮອງປະທານສະພາປະຊົນແຂວງ ຍັງໄດ້ມີຄຳເຫັນໂອ້ລົມຕໍ່ອົງການປົກຄອງບ້ານ, ພໍ່ແມ່ປະຊາຊົນບັນດາເຜົ່າໃນເຂດບ້ານດັ່ງກ່າວ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄວາມດຸໝັ່ນຂະຫຍັນພຽນຂອງພໍ່ແມ່ປະຊາຊົນບັນດາເຜົ່າທີ່ເປັນມູນເຊື້ອ, ເປັນເຈົ້າຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ຕາມທ່າແຮງທີ່ມີຢູ່ແລ້ວ ສຸມໃສ່ການປູກ-ການລ້ຽງ ເພື່ອຊ່ວຍໜູນຊີວິດການເປັນຢູ່ຂອງຄອບຄົວດີນັບມື້ຂຶ້ນ ແລະ ຜະລິດເປັນສິນຄ້າ ສາມາດຕອບສະໜອງຕະຫຼາດພາຍໃນເມືອງ, ແຂວງ ໄດ້ໂດຍພື້ນຖານ; ພ້ອມນີ້, ດ້ວຍຄວາມເປັນຫ່ວງ, ເປັນໃຍຕໍ່ພໍ່ແມ່ປະຊາຊົນບັນດາເຜົ່າ, ທ່ານຍັງໄດ້ຮຽກຮ້ອງ ແລະ ເນັ້ນໜັກໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າຈົ່ງໄດ້ພ້ອມກັນເອົາໃຈໃສ່ສືບຕໍ່ຮັກສາມູນເຊື້ອດຸໝັ່ນຂະຫຍັນພຽນ ແລະ ພ້ອມກັນປົກປັກຮັກສາປ່າໄມ້ໃຫ້ມີຄວາມຍືນຍົງ.

(ວິນນະຄອນ)

## ສະພາປະຊາຊົນແຂວງວຽງຈັນ ປາຖະກະຖາວັນສຳຄັນຂອງພັກ-ຂອງຊາດ



(ສພຊ) ໃນວັນທີ 30 ມີນາຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງວຽງຈັນ ໄດ້ຈັດພິທີປາຖະກະຖາ 2 ວັນປະຫວັດສາດ ຄື: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 68 ປີ (22/3/1955-22/3/2023) ແລະ ວັນຄຽດແຄ້ນຂອງປະຊາຊົນລາວ-ວັນນັກຮົບເສຍອົງຄະ ແລະ ວັນເສຍສະຫຼະຊີວິດເພື່ອຊາດ ຄົບຮອບ 77 ປີ (21/3/194-21/3/2023) ໂດຍການເປັນປະທານ ແລະ ເຜີຍແຜ່ເອກະສານ 2 ວັນປະຫວັດສາດຄັ້ງນີ້ ໂດຍທ່ານ ບຸນສອນ ເພັດດາວັນ ປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມມີຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນການປາຖະກະຖາ 2 ວັນດັ່ງກ່າວ ກໍເພື່ອທົບທວນຫວນຄືນມູນເຊື້ອ, ໄຊຊະນະອັນຍິ່ງໃຫຍ່ຂອງການປະຕິວັດພາຍໃຕ້ການຊີ້ນຳ-ນຳພາຂອງພັກປະຊາຊົນປະຕິວັດລາວ, ເພື່ອສ້າງຄວາມຮັບຮູ້ຢ່າງເລິກເຊິ່ງ ເຖິງຄວາມປີຊາສາມາດ ແລະ ຄວາມສະຫຼາດຫຼັກແຫຼມຂອງພັກເຮົາໃນການນຳພາຂະບວນການຕໍ່ສູ້ປົດປ່ອຍຊາດ ກໍຄືການນຳພາປະຕິບັດສອງໜ້າທີ່ຍຸດທະສາດຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕາມທິດສັງຄົມນິຍົມ, ເພື່ອພ້ອມກັນລະນຶກເຖິງຄຸນງາມຄວາມດີ ແລະ ນ້ຳໃຈເສຍສະຫຼະອັນສູງສົ່ງຂອງບັນດານັກຮົບທີ່ໄດ້ອຸທິດເພື່ອປະເທດຊາດໃນຂະບວນການຕໍ່ສູ້ປົດປ່ອຍຊາດທີ່ມີຫຼາຍເຫດການປະຫວັດສາດ ເຊິ່ງປວງຊົນລາວທັງຊາດບໍ່ມີວັນລືມໄດ້, ເພື່ອເປັນການໂຄສະນາສຶກສາອົບຮົມໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນພາຍໃນສະພາປະຊາຊົນແຂວງ ຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດ, ຄວາມໝາຍຄວາມສຳຄັນ, ການເຕີບໃຫຍ່ຂະຫຍາຍຕົວ, ຜົນສຳເລັດ ແລະ ຜົນງານທີ່ພົ້ນເດັ່ນ ໃນຕະຫຼອດໄລຍະທີ່ຜ່ານມາ.

(ຄຳພັນ ໄຊຍະປະທຸມ)

## ປາຖະກະຖາວັນສຳຄັນຕ່າງໆຂອງພັກ-ຂອງຊາດ



(ສພຊ) ໃນຕອນເຊົ້າວັນທີ 31 ມີນາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ຈັດພິທີປາຖະກະຖາວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 68 ປີ, ວັນຄຽດແຄ້ນຂອງປະຊາຊົນລາວ-ນັກຮົບເສຍອົງຄະ ຄົບຮອບ 77 ປີ ແລະ ວັນສ້າງຕັ້ງແມ່ຍິງສາກົນ ຄົບຮອບ 113 ປີ.

ທ່ານ ກິງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ໂດຍທ່ານໄດ້ຍົກໃຫ້ເຫັນເຖິງປະຫວັດຄວາມເປັນມາ ການກຳເນີດ ແລະ ການຂະຫຍາຍຕົວຂອງພັກປະຊາຊົນປະຕິວັດລາວ ທີ່ພັກໄດ້ນຳພາການປະຕິວັດຊາດປະຊາທິປະໄຕ ພັກປະຊາຊົນປະຕິວັດລາວເປັນອົງການຕົວແທນຂອງຊົນຊັ້ນກຳມະກອນ, ທີ່ນຳພາຕໍ່ສູ້ສັດຕູ ແລະ ສາມາດປົກປ້ອງປະເທດຊາດໄດ້ຢ່າງສົມບູນ ເຊິ່ງປັດຈຸບັນ ແມ່ນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕາມທິດກ້າວສູ່ສັງຄົມນິຍົມ. ຈາກນັ້ນ, ທ່ານ ຄຳຜັນ ຄູນສະຫວັນ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ກໍໄດ້ຫວນຄືນເອກະສານທີສອງ ຍົກໃຫ້ເຫັນກ່ຽວກັບປະຫວັດຄວາມເປັນມາຂອງວັນທີ 21 ມີນາ 1946 ຄືວັນຄຽດແຄ້ນຂອງປະຊາຊົນລາວ ຄົບຮອບ 77 ປີ ແລະ ເອກະສານສຸດທ້າຍແມ່ນທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງ ກໍໄດ້ຂຶ້ນປາຖະກະຖາວັນສ້າງຕັ້ງແມ່ຍິງສາກົນຄົບຮອບ 113 ປີ ຕື່ມອີກ.

# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4

(ສພຊ) ໃນລະຫວ່າງວັນທີ 4-7 ເມສາ 2023 ທ່ານ ຄຳຟອງ ອິນມານີ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3 ແຂວງຫຼວງນໍ້າທາ, ປະທານສະພາປະຊາຊົນແຂວງຫຼວງນໍ້າທາ ພ້ອມດ້ວຍສະພາປະຊາຊົນແຂວງຫຼວງນໍ້າທາ ພ້ອມດ້ວຍບັນດາສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຫຼວງນໍ້າທາ ໄດ້ພົບປະຢ້ຽມຢາມ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງ ຊຸດທີ II ຢູ່ເມືອງຫຼວງນໍ້າທາ ລວມທັງໝົດ 9 ຈຸດ, 9 ບ້ານຄື: ບ້ານນໍ້າກີ່ງ, ບ້ານນໍ້າເຫຼືອງ, ບ້ານນາເຕີຍ, ບ້ານບໍ່ເຕ່ນ, ບ້ານນໍ້າຕະລານ, ບ້ານນໍ້າປີກ, ບ້ານຫ້ວຍທຶກ, ບ້ານນໍ້າແກ ແລະ ບ້ານສາມຍອດ; ເຂົ້າຮ່ວມຮັບຟັງມີຄະນະພັກຮາກຖານກຸ່ມບ້ານ, ນາຍບ້ານພ້ອມດ້ວຍພໍ່ແມ່ປະຊາຊົນເຂົ້າຮ່ວມທັງໝົດ 528 ຄົນ ຍິງ 294 ຄົນ.



ໂອກາດນີ້, ໄດ້ຮັບຟັງການເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນຂອງຊາດຄື: ພິຈາລະນາຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022; ບົດລາຍງານຂອງລັດຖະບານ ກ່ຽວກັບການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021, ຄາດຄະເນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2022; ບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022, ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022; ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022; ບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2022; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 12 ສະບັບ. ພ້ອມນັ້ນ, ໄດ້ຮັບຟັງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງ ຊຸດທີ II ເຊິ່ງກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2022; ບົດລາຍງານການເຄື່ອນໄຫວວຽກງານອົງການກວດສອບ ປະຈຳພາກເໜືອ ປີ 2022 ແລະ ທິດທາງແຜນການ ປີ 2023, ບົດລາຍງານການເຄື່ອນໄຫວວຽກງານປະຈຳປີ 2022 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ; ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ພິຈາລະນາ, ພິຈາລະນາຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງ ຈຳນວນ 3 ສະບັບຄື: ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແຂວງຫຼວງນໍ້າທາ; ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການພັດທະນາເຂດອຸດສາຫະກຳ ແລະ ນິຄົມອຸດສາຫະກຳ; ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງວຽກງານໄປສະນີພາຍໃນແຂວງຫຼວງນໍ້າທາ. ນອກນັ້ນ, ສະມາຊິກສະພາປະຊາຊົນແຂວງ ຍັງໄດ້ເນັ້ນໜັກໃຫ້ພໍ່ແມ່ປະຊາຊົນເອົາໃຈໃສ່ຈັດຕັ້ງປະຕິບັດສອງວາລະແຫ່ງຊາດ ເພື່ອເຮັດໃຫ້ບ້ານເມືອງມີຄວາມສະຫງົບ ແລະ ພ້ອມກັນສ້າງສາພັດທະນາບ້ານ, ພັດທະນາຄອບຄົວໃຫ້ຮັ່ງມີຂຶ້ນເປັນກ້າວໆ. ພ້ອມນັ້ນ, ປະຊາຊົນຍັງໄດ້ສະເໜີຂໍ້ຫຍຸ້ງຍາກຕ່າງໆ ແລະ ສະພາປະຊາຊົນແຂວງຈະນຳໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງເພື່ອແກ້ໄຂຕາມຄວາມຖືກຕ້ອງເໝາະສົມ.



(ນາງ ອຳພອນ ສີປະເສີດ)

# ຮອງປະທານ ສພຂ ພົບປະປະຊາຊົນ ແລະ ຕິດຕາມກວດກາວຽກງານ

(ສພຊ) ໃນລະຫວ່າງວັນທີ 28-30 ມີນາ 2023 ທ່ານ ຂັນໄຊ ລັດຖະເຣົ້າ ສະມາຊິກສະພາແຫ່ງຊາດ (ສສຊ), ຮອງປະທານສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຈັດຕັ້ງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ສະພາປະຊາຊົນແຂວງສາລະວັນ ຊຸດທີ II ທັງຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2023, ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ 2 ເມືອງຄື: ເມືອງສະໝ້ອຍ ໄດ້ 3 ຈຸດຄື: ເທສະບານເມືອງ, ບ້ານໂກຕາຍ, ບ້ານລະວາໃຕ້ ແລະ ເມືອງຕະໂອ້ຍ ໄດ້ 1 ຈຸດຄື: ເທສະບານເມືອງ ເຊິ່ງໄດ້ຮັບການຕ້ອນຮັບ ແລະ ເຂົ້າຮ່ວມຂອງການປົກຄອງເມືອງ, ຄະນະບ້ານ, ມີຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ແລະ ສສຂ ປະຈຳເຂດເລືອກຕັ້ງເມືອງ, ຕາງໜ້າຈາກພະແນກການໃນຂົງເຂດເສດຖະກິດ, ຈາກຫ້ອງການອ້ອມຂ້າງເມືອງທີ່ກ່ຽວຂ້ອງ, ພໍ່ແມ່ປະຊາຊົນເຂົ້າຮ່ວມ.



ທີ່ເທສະບານເມືອງສະໝ້ອຍ, ໄດ້ເຮັດວຽກຮ່ວມກັບອົງການປົກຄອງເມືອງ ເຊິ່ງໄດ້ຮັບຟັງການລາຍງານຈາກທ່ານ ບາເລ ບຸນສະຫວ່າງ ຮອງເຈົ້າເມືອງ ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ໃນໄລຍະຜ່ານມາ, ຮັບຟັງການລາຍງານຄວາມຄືບໜ້າ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກຂອງການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຈາກພາກສ່ວນທີ່ກ່ຽວຂ້ອງຂອງເມືອງ ພ້ອມທັງຮ່ວມກັນສົນທະນາແລກປ່ຽນຄຳຄິດຄຳເຫັນ ເພື່ອຊອກຫາວິທີທາງແກ້ໄຂບາງບັນຫາຕໍ່ຂໍ້ຫຍຸ້ງຍາກທີ່ພົບເຫັນຂອງການຈັດຕັ້ງປະຕິບັດໃນໄລຍະຜ່ານມາ.

ສ່ວນຈຸດບ້ານຕ່າງໆຂອງເມືອງສະໝ້ອຍ, ສສຊ-ສສຂ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ, ສະພາປະຊາຊົນແຂວງ ແລະ ສອງວາລະແຫ່ງຊາດ, ເປັນການລົງພົບປະຢ້ຽມຢາມ ແລະ ຮັບຟັງຄຳຄິດເຫັນ, ຄຳສະເໜີຂອງປະຊາຊົນ ກໍຄືຜູ້ມີສິດເລືອກຕັ້ງ ແລະ ຮັບເອົາຄຳສະເໜີ ນຳໄປຄົ້ນຄວ້າ ແລະ ສະເໜີຕໍ່ຂັ້ນເທິງ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອນຳໄປແກ້ໄຂໃນຕໍ່ໜ້າ. ຈາກນັ້ນ, ສສຊ ແລະ ສສຂ ກໍໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ ແລະ ອະທິບາຍພ້ອມທັງຊີ້ແຈງບາງຄຳສະເໜີຂອງຜູ້ມີສິດເລືອກຕັ້ງ.

ທີ່ເທສະບານເມືອງຕະໂອ້ຍ, ໄດ້ຮັບຟັງການລາຍງານຈາກທ່ານ ຄຳສະໄຫວ ວິລະກອນ ຮອງເລຂາພັກເມືອງ ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ໃນໄລຍະຜ່ານມາ, ຮັບຟັງການລາຍງານຄວາມຄືບໜ້າ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກຂອງການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຈາກພາກສ່ວນທີ່ກ່ຽວຂ້ອງຂອງເມືອງ; ຮັບຟັງການລາຍງານ ແລະ ຊີ້ແຈງຈາກພະແນກການໃນຂົງເຂດເສດຖະກິດຂອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານລະຫວ່າງແຂວງ ແລະ ເມືອງ, ຮ່ວມກັນສົນທະນາແລກປ່ຽນຄຳຄິດຄຳເຫັນ ເພື່ອຊອກຫາວິທີທາງແກ້ໄຂບາງບັນຫາຈັດຕັ້ງປະຕິບັດໃນໄລຍະຜ່ານມາ.

ໃນການເຄື່ອນໄຫວແຕ່ລະຈຸດ, ຮອງປະທານ ສພຂ ໄດ້ເນັ້ນໜັກໃຫ້ຜູ້ມີສິດເລືອກຕັ້ງ ພ້ອມກັນສູ້ຊົນເອົາໃຈໃສ່ຈັດຕັ້ງປະຕິບັດສອງວາລະແຫ່ງຊາດໃຫ້ປາກົດຜົນເປັນຈິງ, ອະນຸລັກຮັກສາຮີດຄອງປະເພນີອັນດີງາມຂອງຊາດ-ຂອງເຜົ່າ, ມີຄວາມດຸໝັ່ນຂະຫຍັນພຽນໃນການປູກ-ການລ້ຽງໃຫ້ກາຍເປັນສິນຄ້າ ເພື່ອສ້າງເສດຖະກິດຄອບຄົວໃຫ້ດີຂຶ້ນ ພ້ອມກັນຕໍ່ຕ້ານປາກົດການຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນພາຍໃນເມືອງ, ບ້ານໃຫ້ນັບມື້ນັບຫຼຸດໜ້ອຍຖອຍລົງເທື່ອລະກ້າວ, ສະກັດກັ້ນອັກຄີໄພບໍ່ໃຫ້ໄຟໄໝ້ລາມປ່າ.

ການເຄື່ອນໄຫວຄັ້ງນີ້, ສສຊ ແລະ ສສຂ ຍັງໄດ້ເຄື່ອນໄຫວຕິດຕາມກວດກາສະຖານທີ່ສ້າງທາງແຕ່ແຍກທາງ 26905 ຫາດ່ານໂກຕາຍມີລວງຍາວ 21,460 ກິໂລແມັດ, ຈຸດກໍ່ສ້າງຂົວເບຕົງເສີມເຫຼັກອັດແຮງຄວາມຍາວ ລວມທັງໝົດ 225 ແມັດ, ການກໍ່ສ້າງທາງເວັ້ນຫຼັກໝາຍແດນປະເທດທາງ 26905 ລວງຍາວ 1,105 ກິໂລແມັດ ຂອງບໍລິສັດຈະເລີນໄຊກໍ່ສ້າງຂົວທາງເຄຫາສະຖານ ແລະ ກໍ່ສ້າງຊົນລະປະທານ; ຕິດຕາມກວດກາຈຸດທີ່ຈະຕັ້ງປ້ອມ ຫຼື ດ່ານໂກຕາຍໃໝ່ (ສາມແຍກເມືອງກະລຶມ), ຕິດຕາມກວດກາຈຸດກໍ່ສ້າງເສັ້ນທາງແຍກທາງເລກທີ 15 ບ້ານຕະປຸງແລງ ຫາບ້ານກູໂວຍ ເມືອງສະໝ້ອຍ; ຕິດຕາມກວດກາຜົນສຳເລັດໂຄງການກໍ່ສ້າງຂົວເບຕົງເສີມເຫຼັກອັດແຮງ 2 ແຫ່ງຄື: ຂົວຂ້າມເຊລະມັງ ແລະ ຂົວຂ້າມເຊປະກັນ ຊາຍແດນເມືອງຕະໂອ້ຍ ແຂວງສາລະວັນ, ການກໍ່ສ້າງເສັ້ນທາງຈາກເມືອງຕະໂອ້ຍ ແຂວງສາລະວັນ ຫາເມືອງນອງ ແຂວງສະຫວັນນະເຂດ, ການກໍ່ສ້າງເສັ້ນທາງແຕ່ເມືອງຕະໂອ້ຍ ແຂວງສາລະວັນ ຫາເມືອງກະລຶມໃໝ່ ແຂວງເຊກອງ.

ການເຄື່ອນໄຫວແມ່ນໄດ້ຮັບການສະໜັບສະໜູນງົບປະມານຈາກໂຄງການສ້າງຂີດຄວາມສາມາດ ແລະ ປະສິດທິພາບສະພາປະຊາຊົນແຂວງ ໃນ ສປປລາວ STEPS.

(ນາງ ຄັດສອນ ຣຸ່ງສະຫວ່າງ)




# ກົດໝາຍ
# ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

**ໝວດທີ 4**
**ການລົງທຶນໃນຫຼັກຊັບ**

**ມາດຕາ 20 (ໃໝ່) ການລົງທຶນໃນຫຼັກຊັບ**

ການລົງທຶນໃນຫຼັກຊັບ ແມ່ນການນຳເງິນທຶນເຂົ້າມາລົງທຶນໃນຫຼັກຊັບປະເພດທຶນ ແລະ ປະເພດໜີ້ ຢູ່ ສປປລາວ ຂອງຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ ຫຼື ການນຳເອົາທຶນໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດຂອງຜູ້ມີພູມລຳເນົາ ຢູ່ ສປປລາວ.

**ມາດຕາ 21 (ໃໝ່) ການລົງທຶນໃນຫຼັກຊັບ ຢູ່ ສປປລາວ**

ຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ ທີ່ມີຈຸດປະສົງນຳເງິນທຶນເຂົ້າມາລົງທຶນໃນຫຼັກຊັບ ຢູ່ ສປປລາວ ຕ້ອງເປີດບັນຊີເງິນຝາກນຳທະນາຄານທຸລະກິດ ຢູ່ ສປປ ລາວ ເພື່ອຮອງຮັບການລົງທຶນໃນຫຼັກຊັບ ຕາມກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງ.

ຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ ທີ່ໄດ້ລົງທຶນໃນຫຼັກຊັບ ຢູ່ ສປປລາວ ສາມາດໂອນເງິນຕົ້ນທຶນ, ເງິນປັນຜົນ ແລະ ກຳໄລ ກັບຄືນປະເທດ ຜ່ານບັນຊີເງິນຝາກທີ່ເປີດໄວ້ຮອງຮັບການລົງທຶນໃນຫຼັກຊັບຕາມກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງ.

ຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນເຈົ້າການກຳນົດແຜນການເຄື່ອນໄຫວ ແລະ ປະລິມານການລົງທຶນໃນຕະຫຼາດທຶນ ເພື່ອເປັນຂໍ້ມູນສະໜອງໃຫ້ທະນາຄານແຫ່ງ ສປປລາວ.

**ມາດຕາ 22 (ໃໝ່) ການລົງທຶນໃນຫຼັກຊັບຢູ່ຕ່າງປະເທດ**

ຜູ້ມີພູມລຳເນົາ ຢູ່ ສປປລາວ ທີ່ມີຈຸດປະສົງໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຕ້ອງຂໍອະນຸຍາດນຳຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການທີ່ກ່ຽວຂ້ອງ.

ຜູ້ມີພູມລຳເນົາ ຢູ່ ສປປລາວ ທີ່ໄດ້ລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຕ້ອງໂອນຕົ້ນທຶນ, ເງິນປັນຜົນ, ດອກເບ້ຍ ແລະ ລາຍຮັບອື່ນທີ່ເກີດຈາກການລົງທຶນເຂົ້າມາ ສປປລາວ ຜ່ານລະບົບທະນາຄານ.

ຄະນະກຳມະການຄຸ້ມຄອງຫຼັກຊັບ ມີໜ້າທີ່ສ້າງແຜນຄວາມຕ້ອງການການລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ແລະ ຕິດຕາມກວດກາການລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ພ້ອມທັງລາຍງານໃຫ້ທະນາຄານແຫ່ງ ສປປລາວ.

**ມາດຕາ 23 (ໃໝ່) ການອອກຫຼັກຊັບປະເພດທຶນຢູ່ຕ່າງປະເທດ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ອອກຈຳໜ່າຍຫຼັກຊັບປະເພດທຶນຢູ່ຕ່າງປະເທດ ຕ້ອງນຳທຶນທີ່ລະດົມໄດ້ເຂົ້າມາ ສປປລາວ. ໃນກໍລະນີມີຄວາມຈຳເປັນນຳໃຊ້ທຶນດັ່ງກ່າວຢູ່ຕ່າງປະເທດ ຕ້ອງຂໍອະນຸຍາດນຳທະນາຄານແຫ່ງ ສປປລາວ.

**ໝວດທີ 5**
**ການກູ້ຢືມລະຫວ່າງປະເທດ**

**ມາດຕາ 24 (ໃໝ່) ການກູ້ຢືມລະຫວ່າງປະເທດ**

ການກູ້ຢືມລະຫວ່າງປະເທດ ປະກອບດ້ວຍ ການກູ້ຢືມຂອງລັດຖະບານ ແລະ ພາກສ່ວນອື່ນກັບຕ່າງ ປະເທດ ໃນຮູບແບບກູ້ຢືມໂດຍກົງ, ກູ້ຢືມທາງອ້ອມ ເປັນຕົ້ນ ພັນທະບັດ, ຮຸ້ນກູ້, ສິນເຊື່ອການຄ້າ, ໜັງສືຄໍ້າປະກັນສິນເຊື່ອ.

**ມາດຕາ 25 (ປັບປຸງ) ການກູ້ຢືມເງິນລະຫວ່າງປະເທດຂອງລັດຖະບານ**

ການກູ້ຢືມເງິນຈາກຕ່າງປະເທດຂອງລັດຖະບານ ປະກອບດ້ວຍການກູ້ຢືມໂດຍກົງ, ການອອກພັນທະບັດ ແລະ ການຄໍ້າປະກັນເງິນກູ້ກັບຕ່າງປະເທດຂອງລັດຖະບານ. ການກູ້ຢືມຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ. ກະຊວງການເງິນ ແຈ້ງແຜນການກູ້ຢືມເງິນ, ແຜນຊຳລະໜີ້ສິນ ແລະ ການຄໍ້າປະກັນເງິນກູ້ດັ່ງກ່າວ ໃຫ້ທະນາຄານແຫ່ງ ສປປລາວ.

ເງິນກູ້ຢືມຈາກຕ່າງປະເທດຂອງລັດຖະບານ ຕ້ອງລວມສູນເຂົ້າບັນຊີເງິນຝາກຂອງກະຊວງການເງິນ ຫຼື ບັນຊີໂຄງການຂອງລັດຖະບານ ທີ່ເປີດໄວ້ນຳທະນາຄານແຫ່ງ ສປປລາວ. ເງິນກູ້ດັ່ງກ່າວ ສາມາດນຳໃຊ້ຊຳລະກັບຕ່າງປະເທດໂດຍກົງ ຫຼື ແລກປ່ຽນເອົາເງິນກີບນຳທະນາຄານແຫ່ງ ສປປລາວ ເພື່ອນຳໃຊ້ຢູ່ພາຍໃນປະເທດ.

ການໃຫ້ກູ້ຢືມຂອງລັດຖະບານ ສປປລາວ ແກ່ຕ່າງປະເທດ ຕ້ອງປະຕິບັດລວມສູນຢູ່ກະຊວງການເງິນ ໂດຍປະສານສົມທົບກັບທະນາຄານແຫ່ງ ສປປລາວ.

**ມາດຕາ 26 (ປັບປຸງ) ການກູ້ຢືມເງິນລະຫວ່າງປະເທດຂອງພາກສ່ວນອື່ນ**

ການກູ້ຢືມເງິນລະຫວ່າງປະເທດຂອງພາກສ່ວນອື່ນ ປະກອບດ້ວຍ ການກູ້ຢືມລະຫວ່າງສະຖາບັນການເງິນ, ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງສັງຄົມ ຢູ່ ສປປລາວ ກັບຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ.

ສະຖາບັນການເງິນ, ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງສັງຄົມຢູ່ ສປປ ລາວ ທີ່ມີຈຸດປະສົງໃຫ້ ຫຼື ຮັບເງິນກູ້ຢືມລະຫວ່າງປະເທດ ຕ້ອງຂໍອະນຸຍາດນຳທະນາຄານແຫ່ງ ສປປລາວ ຕາມລະບຽບການທີ່ກ່ຽວຂ້ອງ ແລະ ຕ້ອງລາຍງານການຊຳລະເງິນກູ້ໃຫ້ທະນາຄານແຫ່ງ ສປປລາວ ຈົນກວ່າຈະຄືນຖ້ວນຕາມສັນຍາ. ການໃຫ້ ຫຼື ຮັບ ເງິນກູ້ຢືມດັ່ງກ່າວ ຕ້ອງດຳເນີນຜ່ານລະບົບທະນາຄານເທົ່ານັ້ນ.

**ມາດຕາ 27 (ໃໝ່) ສິນເຊື່ອການຄ້າລະຫວ່າງປະເທດ**

ສິນເຊື່ອການຄ້າລະຫວ່າງປະເທດ ແມ່ນສັນຍາຊື້-ຂາຍ ສິນຄ້າ ແລະ ການບໍລິການແບບຕິດໜີ້ ລະຫວ່າງຜູ້ມີພູມລຳເນົາ ຢູ່ ສປປລາວ ກັບ ຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ.

ການໃຫ້ ຫຼື ຮັບ ສິນເຊື່ອການຄ້າລະຫວ່າງປະເທດ ທີ່ມີກຳນົດເວລາໜຶ່ງປີລົງມາ ໃຫ້ດຳເນີນການຜ່ານທະນາຄານທຸລະກິດທີ່ຕັ້ງຢູ່ ສປປລາວ ໂດຍກົງຕາມນະໂຍບາຍ ແລະ ລະບຽບການທີ່ທະນາຄານແຫ່ງ ສປປລາວ ກຳນົດ.

ການໃຫ້ ຫຼື ຮັບ ສິນເຊື່ອການຄ້າລະຫວ່າງປະເທດ ທີ່ມີກຳນົດເວລາເກີນ ໜຶ່ງປີ ຕ້ອງຂໍອະນຸຍາດນຳທະນາຄານແຫ່ງ ສປປ ລາວ ໂດຍຜ່ານທະນາຄານທຸລະກິດ.

ທະນາຄານທຸລະກິດ ຕ້ອງລາຍງານການເຄື່ອນໄຫວກ່ຽວກັບສິນເຊື່ອການຄ້າລະຫວ່າງປະເທດ ໃຫ້ທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 28 (ໃໝ່) ໜີ້ສິນຕ່າງປະເທດ**

ໜີ້ສິນຕ່າງປະເທດ ແມ່ນພັນທະທາງການເງິນທີ່ຜູ້ມີພູມລຳເນົາຢູ່ ສປປລາວ ສ້າງຂຶ້ນດ້ວຍການກູ້ຢືມ, ຄໍ້າປະກັນການກູ້ຢືມ, ຮັບສິນເຊື່ອການຄ້າຈາກຕ່າງປະເທດ, ອອກພັນທະບັດ ຫຼື ອອກຮຸ້ນກູ້ໃຫ້ຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ ແລະ ເງິນຝາກຂອງຜູ້ບໍ່ມີພູມລຳເນົາ ຢູ່ ສປປລາວ.

ໜີ້ສິນຕ່າງປະເທດຂອງ ສປປລາວ ປະກອບດ້ວຍ:

1. ໜີ້ສິນຂອງພາກລັດ ຊຶ່ງແມ່ນໜີ້ສິນສາທາລະນະຕໍ່ຕ່າງປະເທດ;

ອ່ານຕໍ່ສະບັບໜ້າ...




## ວິທີເຮັດວຽກ

ພາກທີ 3
ພະຍາດເປັນແຕ່ປາກ (ຕໍ່)

1. ຖືແຕ່ແບບເກົ່າ:

ບໍ່ວ່າເວລາໃດ ບໍ່ວ່າຢູ່ບ່ອນໃດ ກໍດື້ດ້ານ ເຮັດແຕ່ແບບເກົ່າ ຄື:

1. ສະພາບການຂອງໂລກ.
2. ສະພາບການອິນດູຈີນ.
3. ລາຍງານວຽກງານ.
4. ຖົກຖຽງກັນ.
5. ຕາໜິກັນ.
6. ປິດກອງປະຊຸມ.

ການເຂົ້າໃຈສະພາບການຂອງໂລກ ແລະ ຂອງພາຍໃນປະເທດນັ້ນ ແມ່ນເປັນການດີທີ່ສຸດ ເປັນສິ່ງທີ່ຕ້ອງການແທ້. ແຕ່ມັນເປັນໜ້າເສຍດາຍ ທີ່ຜູ້ແທນຊັ້ນສູງມາຮອດ ເລີຍມາກ່າວປາໄສ ເປັນຊົ່ວໂມງສອງຊົ່ວໂມງ ເວົ້າເຖິງສິ່ງທີ່ບໍ່ເຂົ້າໃຈເລື່ອງຄື: ແຜນການມາກຊານ, ພູມີສາດປະເທດປາລາໄກວ ແລະ ອື່ນໆ ທີ່ຜູ້ມານັ່ງຟັງບໍ່ເຂົ້າໃຈຈັກເມັດ. ແລ້ວຖືວ່າອັນນັ້ນ ແມ່ນຂໍ້ທີ່ໜຶ່ງ ແມ່ນສະພາບການຂອງໂລກ.

ຜົນສຸດທ້າຍ ວຽກຕົວຈິງທີ່ຄວນເຮັດ ຄວນເວົ້າກໍ່ເລີຍບໍ່ເວົ້າ ແລະ ບໍ່ເຮັດ.

ຂ) ເວົ້າບໍ່ມີຜູ້ໃດເຂົ້າໃຈ:

ພັກເຮົາມັກຮຽກຮ້ອງໃຫ້ສະມາຊິກຂອງພວກເຮົາເຮັດຫຍັງກໍໃຫ້ຖືກກັບວິທະຍາສາດ ຖືກກັບລັກສະນະຂອງຊາດ ແລະ ຖືກກັບຈິດໃຈຂອງປະຊາຊົນ ຄວາມຮຽກຮ້ອງນັ້ນແມ່ນຖືກຕ້ອງ. ແຕ່ເປັນໜ້າເສຍດາຍ ທີ່ພະນັກງານຂອງພວກເຮົາບາງຄົນຍັງບໍ່ເຮັດຖືກຕາມແນວນັ້ນ, ເຮັດຫຍັງກໍຍັງດື້ເຮັດຕາມແບບເກົ່າ ຕາມວິທີເກົ່າທີ່ຕົນເຄີຍໄດ້ເຮັດມາ ປາກກໍຮ້ອງວ່າ ໃຫ້ເຮັດຕາມຈິດໃຈຂອງປະຊາຊົນ ແຕ່ບາດເຮັດພັດໄປເຮັດຕາມໃຈໂຕເອງ ຄົນຈຳພວກນີ້ ແມ່ນຈະໄປຂຽນບົດຄວາມໃດໆ ຫຼືໄປເວົ້າຄວາມໃດໆ ປະຊາຊົນກໍຟັງບໍ່ໄດ້, ເບິ່ງບໍ່ໄດ້, ເຂົ້າໃຈບໍ່ໄດ້ ການທີ່ເປັນດັ່ງນັ້ນ ກໍຍ້ອນວ່າຄົນຈຳພວກນີ້ ເຂົາບໍ່ຮຽນນຳປະຊາຊົນ ບໍ່ເຂົ້າໃຈວ່າປະຊາຊົນເປັນແນວໃດແທ້.

ອ່ານຕໍ່ສະບັບໜ້າ...




# ທີ່ເພິ່ງທາງໃຈ

# ຕົ້ນກົບເມກ

ຄວາມເຊື່ອທີ່ສັບສົນ ນຳມາເຊິ່ງຄວາມວຸ້ນວາຍແກ່ຊີວິດ ແລະ ຊີວິດທີ່ຂາດຫຼັກ ນຳມາເຊິ່ງຄວາມອ້າງວ້າງດຽວດາຍ ບວກໃສ່ພາວະເສດຖະກິດໜີບຮັດ ນຳມາເຊິ່ງການຫາກິນຝືດເຄືອງ ເຮັດໃຫ້ຜູ້ມີໂອກາດບາງຄົນຄິດຫຼອກລວງ ຕົວະຕົ້ມຮ່ວມທຶນທຸລະກິດສໍ້ໂກງກັນ ຫຍຸ້ງຍາກ, ຄວາມສະເໝີພາບເປັນສິ່ງທີ່ດີ, ສິດທິສະເໝີພາບເປັນສິ່ງທີ່ດີ ແຕ່ຍາມໃດກໍຕາມ ຖ້າວ່າຄົນເຮົາຫຼົງເຫີ່ຄວາມສະເໝີພາບຈົນບໍ່ໄດ້ຄິດແງ່ຂະໜົບທຳນຽມປະເພນີ ກໍພາໃຫ້ຄອບຄົວເຮືອນຊານແຕກແຍກໄດ້. ຜູ້ຂຽນເຂົ້າໃຈວ່າ ເມື່ອມີຝອຍ ໝາຈຶ່ງຂີ້ ຫຼາຍບັນຫາທີ່ເກີດຂຶ້ນມັນຍ່ອມມີສາເຫດຂອງມັນ, ບາງຄົນໃນສັງຄົມໃຊ້ຊີວິດສຸດຢຽດ, ລົດມີ, ເຮືອນມີ, ເງິນມີ ແຕ່ສິ່ງທີ່ຂາດຄື: ຄວາມສຸກໃນຊີວິດຄອບຄົວ, ຄວາມສຸກທາງໃຈ ພໍເຖິງເວລາໃດໜຶ່ງກໍຫັນທິດຊີວິດເພິ່ງສັດທາເພິ່ງບຸນ, ບາງຄົນຍ່າງຖືກທາງກໍບໍ່ເສຍຫຼັກເສຍເວລາ ແຕ່ບາງຄົນຄົບຜິດ-ຍ່າງຜິດສາຍທາງ ກໍໄດ້ແຕ່ທ່ຽວເລາະຊອກສະແຫວງບຸນ, ຊອກສະແຫວງໂຊກລາບ ບ່ອນໃດໝໍດີ-ບ່ອນໃດອາຈານດັງ ຂໍແຕ່ຮູ້ຂ່າວກໍຟ້າວໄປເພິ່ງທັນທີ; ບາງຄົນເພິ່ງໄດ້ຊົ່ວຄາວ; ບາງຄົນຖືກບອກໃຊ້ວັດຖຸສະເດາະເຄາະ ແລກຄວາມສຸກທາງໃຈ.

ພະພຸດທະເຈົ້າຜູ້ນຳແຫ່ງພຸດທະສາສະໜາ ສອນວ່າ: ໃນໂລກນີ້ ບໍ່ມີທີ່ເພິ່ງອັນໃດຈະປະເສີດທຽບເທົ່າກັບການສ້າງຕົວເອງໃຫ້ເປັນທີ່ເພິ່ງແກ່ຕົນເອງ ສ້າງຕົນເອງໃຫ້ເຂັ້ມແຂງ-ພັດທະນາໂຕເອງ ໃຫ້ເກີດສະຕິປັນຍາພຽງພໍ, ຮູ້ຈັກແຍກແຍະເຫດຜົນ-ຮູ້ຈັກຊົ່ງຊາສົມເຫດ-ສົມຜົນ ຖືເປັນສິ່ງທີ່ປະເສີດ, ຖ້າເຮົາມີເຮືອນຄົນວ່າມັກໄຫວ້ພະສູດມົນ ກໍບໍ່ຈຳເປັນຕ້ອງທ່ຽວເລາະໄປໄກໃຫ້ເປືອງນ້ຳມັນລົດ ສະແຫວງຫາໂຊກລາບ ຖ້າວ່າເຮືອນໂຕເອງຍັງຈັດສັນບໍ່ເປັນລະບຽບ ວ່າອັນໃດບ່ອນເກັບເສື້ອຜ້າ, ອັນໃດຫ້ອງນອນ, ອັນໃດຫ້ອງພະ, ອັນໃດຫ້ອງຄົວ... ຖ້າຈັດເຮືອນບໍ່ເປັນລະບຽບ ກໍຍາກທີ່ຈະໄປຈັດສັນຊີວິດລາບລື້ນ ສຸດທ້າຍເຂົ້າທຳນອງ ຮູ້ແຕ່ບ່ອນອາຈານດັງ ແຕ່ບໍ່ຮູ້ຊີເອົາໂຕລອດ ເພາະຫວັງແຕ່ເພິ່ງປັດໄຈນອກໂຕ.

# ວັນກຳມະກອນສາກົນ

# ໂດຍ: ບົງເອີນ

ວັນທີ 1 ພຶດສະພາ ແມ່ນວັນສຳຄັນຂອງຊາວຜູ້ອອກແຮງງານທົ່ວໂລກ ເປັນສັນຍະລັກກ່ຽວກັບການຕໍ່ສູ້ຊົນຊັ້ນຂອງຊາວຜູ້ອອກແຮງງານ ເປັນມື້ທີ່ຜູ້ອອກແຮງງານທົ່ວໂລກ ຮ່ວມກັນລະນຶກເຖິງການຕໍ່ສູ້ຂອງຊາວຜູ້ອອກແຮງງານໃນອະດີດ ທີ່ໄດ້ຕໍ່ສູ້ເພື່ອຄວາມຫວັງ ແລະ ອະນາຄົດທີ່ດີ; ວັນກຳມະກອນສາກົນ ມີການກຳເນີດທີ່ຕິດພັນກັບການຕໍ່ສູ້ຂອງຊາວຜູ້ອອກແຮງງານໃນທົ່ວໂລກ ກໍຄືການຕໍ່ສູ້ຂອງຊາວຜູ້ອອກແຮງງານໃນສະຫະລັດອາເມລິກາ ທີ່ໄດ້ຕໍ່ສູ້ເລີ່ມແຕ່ສັດຕະວັດທີ 19 ເປັນຕົ້ນມາ ສະນັ້ນ, ຈຶ່ງເວົ້າໄດ້ວ່າ ເປັນມື້ທີ່ຊາວຜູ້ອອກແຮງງານໂຮມແຮງໂຮມໃຈກັນລຸກຂຶ້ນຕໍ່ສູ້ຮຽກຮ້ອງສິດ ແລະ ຜົນປະໂຫຍດຂອງພວກເຂົາໃນການເຮັດວຽກ ເປັນມື້ທີ່ສະແດງໃຫ້ເຫັນເຖິງຈິດໃຈຂອງຊາວຜູ້ອອກແຮງງານທີ່ມີຄວາມເປັນເອກະພາບ ແລະ ສາມັກຄີສາກົນ ຫຼື International solidarity ເປັນການປະຕິບັດຮ່ວມກັນຂອງຊາວຜູ້ອອກແຮງງານ ໂດຍບໍ່ມີການແບ່ງແຍກສີຜິວ, ສາສະໜາ, ຄວາມເຊື່ອ ແລະ ຊາຍແດນ ໃນສະຫະລັດອາເມລິກາ.

ວັນທີ 1 ພຶດສະພາ 1886 ທີ່ຊິຄາໂກ ຈຶ່ງຖືກຈາລຶກໄວ້ໃນປະຫວັດສາດ ຂອງຊົນຊັ້ນກຳມະຊີບຂອງໂລກ ວ່າມື້ນີ້ ເປັນມື້ທີ່ຊາວຜູ້ອອກແຮງງານທົ່ວໂລກ ປິດໂສ້ລ່າມ, ປົດແອກ ປະກາດອິດສະຫຼະອິດພາບ ພ້ອມທັງຮຽກຮ້ອງໃຫ້ບັນດານາຍທຶນ ຍອມປະຕິບັດຕາມຂໍ້ສະເໜີຂອງພວກເຂົາເຈົ້າ ກໍຄືການຫຼຸດຊົ່ວໂມງເຮັດວຽກລົງ ບໍ່ໃຫ້ກາຍ 8 ຊົ່ວໂມງຕໍ່ມື້; ກຳມະກອນທົ່ວໂລກພາກັນລຸກຂຶ້ນຕໍ່ສູ້ດ້ວຍຄວາມໄຝ່ຝັນ ແລະ ຄວາມຫວັງ ທີ່ຈະສ້າງອະນາຄົດອັນສົດໃສ ດ້ວຍສອງມືຂອງພວກເຂົາ ແລະ ໃນປີ 1889 ກອງປະຊຸມຂອງອົງການກຳມະກອນສາກົນ ທີ່ນະຄອນປາຣີ ໂດຍມີຊາວຜູ້ອອກແຮງງານຈາກຫຼາຍປະເທດເຂົ້າຮ່ວມ ແລະ ໄດ້ລົງມະຕິຕົກລົງກຳນົດເອົາວັນທີ 1 ພຶດສະພາ ຂອງທຸກປີເປັນວັນກຳມະກອນສາກົນ.





# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ກະທັດຮັດ | ກະທັດລັດ |
| ຄັ້ງແຮກ | ຄັ້ງແລກ |
| ສາຍຮຸ້ງ | ສາຍລຸ້ງ |
| ທະຫານຮາບ | ທະຫານລາບ |
| ບູຮານ | ບູລານ |
| ຮັບຮອງ | ລັບລອງ |
| ຮຸກຮານ | ລຸກລານ |
| ຮ້ອຍ | ລ້ອຍ |




# ລູກສາວທັງ 7 ຂອງພະຍາກະບິນລະພົມ

ເມື່ອເຖິງຍາມບຸນປີໃໝ່ລາວ (ເດືອນເມສາ) ຕາມທາງຈັນທະຄະຕິ ຊຶ່ງໃພງກ່າມັກກ່າວເຖິງພະຍາກະບິນລະພົມທີ່ລົງມາທວາຍບັນຫາກັບທ້າວທຳມະບານກຸມມານທີ່ມີຊື່ສຽງ ແລະ ຮຽນຈົບໄຕເພດ (ເວດ) ໃນຄຳພີທັງ 3 ຂອງສາສະໜາພາມ ຄື:

1. ຣິກຄະເວດ
2. ຍາສຸຣະເວດ
3. ສາມະເວດ ຫຼື ໄຕເວດ ຕໍ່ມາ ມີການເພີ່ມເຂົ້າໄປອີກ ເປັນຄຳພີທີ 4 ຄື: ອາກັບພະນະເວດ

ສ່ວນລູກສາວທັງ 7 ຂອງພະຍາກະບິນລະພົມ ທີ່ເຮົາເອີ້ນວ່າ ນາງສັງຂານນັ້ນ ດັ່ງນີ້:

1. ນາງ ທຸງສະເທວີ ຈະລົງມາໃນວັນອາທິດ ຂີ່ໂຕຄຸດ
2. ນາງໂຄຣາຄະເທວີ ຈະລົງມາໃນວັນຈັນ ຂີ່ເສືອໂຄ່ງ
3. ນາງ ຣາກສະເທວີ ຈະລົງມາໃນວັນອັງຄານ ຂີ່ໝູ
4. ນາງ ມົນທາເທວີ ຈະລົງມາໃນວັນພຸດ ຂີ່ມ້າລໍ
5. ນາງ ກິລິນີເທວີ ຈະລົງມາໃນວັນພະຫັດ ຂີ່ຊ້າງ
6. ກິມິທາເທວີ ຈະລົງມາໃນວັນສຸກ ຂີ່ຄວາຍ
7. ມະໂຫທອນເທວີ ຈະລົງມາໃນວັນເສົາ ຂີ່ນົກຍູງ

ນາງທັງ 7 ນີ້ ພວກເຮົາເວົ້າວ່າ ນາງສັງຂານ ຫຼື ນາງສົງການ




# ພິໄນກຳ – ນິຕິໄນ–ນິຕິກຳ

'ພິໄນກຳ', 'ນິຕິໄນ' ແລະ 'ນິຕິກຳ' ເປັນສາມຄຳທີ່ກ່ຽວຂ້ອງກັບກົດໝາຍ ແລະມີຄວາມໝາຍຕ່າງກັນ ດັ່ງນີ້:

'ພິໄນກຳ' ເປັນຄຳປະສົມຈາກເຄົ້າບາລີ ປະເພດຄຳນາມ ປະກອບດ້ວຍຄຳວ່າ 'ພິໄນ' ມາຈາກເຄົ້າບາລີ Vinaya (ວິນະຍະ) ແລ້ວແປງສຽງ ວ ເປັນ ພ ກາຍເປັນ 'ພິໄນ' ໝາຍເຖິງ "ຂໍ້ຄວາມແນະນຳ, ຂໍ້ບັງຄັບ" ແລະ 'ກຳ' ມາຈາກເຄົ້າບາລີ Kamma (ກັມມະ) ແລ້ວສະກົດເປັນຄຳລາວຕາມໄວຍາກອນລາວປັດຈຸບັນ 'ກຳ' ໝາຍເຖິງ "ການກະທຳ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ພິໄນກຳ' ກໍມີຄວາມໝາຍວ່າ "ໜັງສືສຳຄັນໃນການມອບມໍລະດົກທີ່ເຮັດໄວ້ກ່ອນຕາຍ" ເຊັ່ນ

- ພໍ່ເຖົ້າສາໄດ້ເຮັດພິໄນກຳມອບຊັບສົມບັດໃຫ້ແກ່ລູກຫຼານກ່ອນຈະເສຍຊີວິດ.
- ຢູ່ໃນກົດໝາຍວ່າດ້ວຍການສືບທອດມູນມໍລະດົກ ປີ 2008 ໃນມາດຕາ 3 ເພິ່ນໄດ້ອະທິບາຍຄວາມໝາຍຂອງ ພິໄນກຳ ວ່າ: ພິໄນກຳ ໝາຍເຖິງ "ເອກະສານທາງດ້ານກົດໝາຍ ທີ່ເຈົ້າຂອງຊັບໄດ້ສະແດງເຈດຈຳນົງຂອງຕົນ ດ້ວຍການເຮັດເປັນລາຍລັກອັກສອນ ຫຼື ການສະເໜີທາງປາກເປົ່າ ມອບໃຫ້ບຸກຄົນ ຫຼືການຈັດຕັ້ງ ໂດຍຊ້ອງໜ້າພະຍານຢ່າງໜ້ອຍສາມຄົນ ແລະ ມີການບັນທຶກເອົາໄວ້".

'ນິຕິໄນ' ເປັນຄຳປະສົມຈາກເຄົ້າບາລີ ປະເພດຄຳນາມ ປະກອບດ້ວຍຄຳວ່າ Nīti 'ນິຕິ' ມາຈາກເຄົ້າບາລີ ແລ້ວແປງເປັນສຽງ ນີ ເປັນ ນິ ກາຍເປັນ 'ນິຕິ' ທີ່ໝາຍເຖິງ "ກົດໝາຍ" ແລະ 'ໄນ' ມາຈາກເຄົ້າບາລີ Naya ນັຍຍະ ໝາຍເຖິງ "ຂໍ້ສຳຄັນ, ທາງ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ນິຕິໄນ' ກໍໝາຍເຖິງ "ທາງກົດໝາຍ, ຄວາມໝາຍໃນທາງກົດໝາຍ" ເຊິ່ງມັກໃຊ້ຄຽງຄູ່ກັບຄຳວ່າ 'ພຶດຕິໄນ' ທີ່ໝາຍເຖິງ "ທາງຄວາມເປັນຈິງ, ຄວາມໝາຍໃນທາງຄວາມເປັນຈິງ" ເຊັ່ນ

- ລາວເປັນຜົວຂອງເອື້ອຍຂ້ອຍໂດຍນິຕິໄນ, ແຕ່ໂດຍພຶດຕິໄນແລ້ວ ເຂົາເຈົ້າເປັນໝູ່ກັນຊື່ໆ.

**ຄຳຄົມ ສົມທີ່ຄິດ**

ວັນເວລາຜ່ານພົ້ນໄປຕາມລັງທະຂອງທຳມະຊາດ ແຕ່ກໍຍັງມີຫລາຍຄົນຄິດວ່າມັນຊ່າງຜ່ານໄປໄວ ແຕ່ກໍຍັງມີບາງຄົນຊໍ້າຄິດໄປວ່າ ມັນຊ່າງຜ່ານຊ້າ ເກີນທີ່ຄິດ ຜິດ ຫຼື ຖືກ ມັນຂຶ້ນກັບຈິດເຮົາເປັນຜູ້ຕັດສິນ.



ຂະແໜງການສາທາລະນະສຸກຂອງຈີນ ປະກາດດຳເນີນການປະຕິບັດຍຸດທະສາດລະຫວ່າງປະເທດ ເພື່ອໃຫ້ໂລກນີ້ເປັນ "ເຂດປອດໄຂ້ມາລາເລຍ".

# ຈີນ ກຽມທີ່ຈະກ້າວໄປໜ້າ "ໂລກບໍ່ມີພະຍາດໄຂ້ມາລາເລຍ"



ມີການລາຍງານຂ່າວໃນວັນທີ 26 ເມສານີ້ ໃຫ້ຮູ້ວ່າ: ສູນຄວບຄຸມ ແລະ ປ້ອງກັນພະຍາດແຫ່ງຊາດຈີນ ໄດ້ປະກາດຈະສືບຕໍ່ເພີ່ມທະວີການຮ່ວມມືສາກົນ ໃນການຊ່ວຍປ້ອງກັນ ແລະ ຄວບຄຸມພະຍາດໄຂ້ມາລາເລຍໃນທົ່ວໂລກ ຄຽງຄູ່ກັບການກ້າວໄປສູ່ເປົ້າໝາຍ "ໂລກທີ່ໄຮ້ໄຂ້ມາລາເລຍ".

ມາລາເລຍເຄີຍເປັນພະຍາດຕິດຕໍ່ທີ່ສຳຄັນໃນປະເທດຈີນ ເຊິ່ງຄັ້ງໜຶ່ງໄດ້ສົ່ງຜົນກະທົບ ແລະ ອັນຕະລາຍທີ່ສຸດໃນປະເທດ ໂດຍມີປະຫວັດສາດດົນນານຢ່າງໜ້ອຍ 3.000 ປີ, ແຕ່ດ້ວຍຄວາມພະຍາຍາມຢ່າງຕໍ່ເນື່ອງ ຈີນຈຶ່ງສາມາດຫຼຸດຈຳນວນຄົນເຈັບໄຂ້ມາລາເລຍ ຕໍ່ປີ ຈາກ 30 ລ້ານຄົນ ໃນຊຸມປີ 1940ລົງເປັນສູນໃນປີ2017.

ນອກຈາກນັ້ນ, ອົງການອະນາໄມໂລກ (WHO) ໄດ້ປະກາດຢ່າງເປັນທາງການໃນວັນທີ30 ມິຖຸນາ 2021 ວ່າຈີນເປັນປະເທດທີ່ປອດໄຂ້ມາລາເລຍ ເປັນປະເທດທີ 40 ຂອງໂລກ.

# ນະຄອນຫຼວງອັກກຣາ ເປັນ "ເມືອງໜັງສືໂລກ ປີ 2023"

ອົງການອຸຍແນັດສໂກ (UNESCO) ຍົກໃຫ້ນະຄອນຫຼວງອັກກຣາ ຂອງປະເທດການາ ໄດ້ຮັບຕຳແໜ່ງເມືອງໜັງສືໂລກປີ 2023 ຕໍ່ຈາກນະຄອນກວາດາລາຮາຣາ ລັດຮາລິສໂກ ຂອງປະເທດເມັກຊິກ.

ອີງຕາມການລາຍງານຂ່າວເມື່ອວັນທີ 26 ເມສານີ້ ໃຫ້ຮູ້ວ່າ: ທ່ານ ນາງ ອໍເດຣຍ ອາຊູເລ ຜູ້ອຳນວຍການໃຫຍ່ອົງການການສຶກສາ, ວິທະຍາສາດ ແລະ ວັດທະນະທຳຂອງສະຫະປະຊາຊາດ ຫຼື ອຸຍແນັດສໂກ ກ່າວວ່າ: ໜັງສືແລະການອ່ານແມ່ນສິ່ງຈຳເປັນສຳລັບທຸກຄົນ ເນື່ອງຈາກເປັນແຫຼ່ງຂໍ້ມູນຂ່າວສານ, ຄຳຖາມ ແລະ ອາລົມຄວາມຮູ້ສຶກ ເຊິ່ງຈະເຮັດໃຫ້ພວກເຮົາໃກ້ຊິດກັບໂລກໜ່ວຍນີ້.

ທ່ານໄດ້ເນັ້ນໜັກວ່າ: ຄວາມສຳຄັນຂອງການອ່ານທີ່ມີຕໍ່ປະເທດການາ ແລະ ອາຟຣິກາ ໂດຍຊີ້ໃຫ້ເຫັນວ່າ ການຄັດເລືອກເອົານະຄອນຫຼວງອັກກຣາ ໃຫ້ເປັນເມືອງໜັງສືຂອງໂລກໃນປີນີ້ ຖືເປັນການຮຽກຮ້ອງເພື່ອຊຸກຍູ້ການອ່ານສຳລັບທຸກຄົນ ແລະ ລົບອຸປະສັກຕໍ່ການອ່ານໃນອາຟຣິກາ.

ປະທານາທິບໍດີຂອງການາ ກ່າວວ່າ: ເມືອງໜັງສືໂລກເປັນຫຼາຍກວ່າພຽງແຕ່ໂຄງການປຸກລະດົມການອ່ານ ເຊິ່ງມັນເປັນໂອກາດສຳລັບລັດຖະບານ ແລະ ພັນທະມິດລະຫວ່າງປະເທດ ໃນການນຳໃຊ້ປະໂຫຍດຂອງການເຊື່ອມຕໍ່ວັດທະນະທຳ ແລະ ການສຶກສາ ເພື່ອເພີ່ມທະວີການຮ່ວມ ແລະ ກ້າວໄປສູ່ເປົ້າໝາຍການພັດທະນາແບບຍືນຍົງ ໃນປີ 2030 ຕາມຂອບອົງການສະຫະປະຊາຊາດ ຫຼື SDGs.

ນອກນີ້, ຜູ້ນຳການາຍັງກ່າວວ່າ ເມືອງໜັງສືໂລກຍັງເປັນຕົວກະຕຸ້ນການລົງທຶນໃນຂະແໜງການສ້າງສັນ ແລະ ວັດທະນະທຳຂອງປະເທດການາ ເຊິ່ງຈະຊ່ວຍໃຫ້ຂະແໜງການຂະຫຍາຍຕົວນີ້ ສາມາດສະໜອງການຈ້າງງານທີ່ເໝາະສົມ ມອບໃຫ້ຄົນຮຸ່ນໃໝ່.

# UN ຄາດວ່າ ອິນເດຍກຽມແຊງຈີນ ກາຍເປັນປະເທດທີ່ມີປະຊາກອນຫຼາຍທີ່ສຸດ ໃນໂລກ



ເມື່ອວັນທີ 25 ເມສາ 2023 ໄດ້ມີການລາຍງານວ່າ: ໜ່ວຍງານພາຍໃຕ້ອົງການສະຫະປະຊາຊາດ (UN) ຄືສຳນັກງານກິດຈະການເສດຖະກິດ ແລະ ສັງຄົມແຫ່ງສະຫະປະຊາຊາດ (DESA) ຄາດຄະເນວ່າ: ອິນເດຍກຽມຈະແຊງຈີນ ກາຍເປັນປະເທດທີ່ມີປະຊາກອນຫຼາຍທີ່ສຸດໃນໂລກໃນຜ່ານມານີ້ ໂດຍຈະມີປະຊາກອນອິນເດຍສູງກວ່າ 1.425.775.950 ຄົນ.

DESA ລະບຸວ່າ: ອີກບໍ່ດົນ ຈີນຈະສະຫຼະສະຖານະທີ່ຄອບຄອງມາດົນໃນຖານະປະເທດທີ່ມີປະຊາກອນຫຼາຍທີ່ສຸດໃນໂລກ" ແຕ່ຢ່າງໃດກໍຕາມ, ຄວາມບໍ່ແນ່ນອນຂອງຂໍ້ມູນດ້ານປະຊາກອນຂອງອິນເດຍ ແລະ ຈີນ ໂດຍສະເພາະຂໍ້ມູນການສຳຫຼວດສຳມະໂນຄົວຄັ້ງສຸດທ້າຍຂອງອິນເດຍທີ່ເຄີຍສຳຫຼວດໄວ້ໃນປີ 2011 ເຊິ່ງຄັ້ງຕໍ່ມາແມ່ນປີ 2021 ແຕ່ພັດຕ້ອງຊັກຊ້າອອກໄປເນື່ອງຈາກວິກິດການແຜ່ລະບາດຂອງໂຄວິດ ອາດເຮັດໃຫ້ຂໍ້ມູນການຄາດເຄື່ອນໄດ້.

ໂດຍກ່ອນໜ້ານີ້ອີກໜຶ່ງໜ່ວຍງານພາຍໃຕ້ UN ຄືກອງທຶນປະຊາກອນແຫ່ງສະຫະປະຊາຊາດ (UNFPA) ໄດ້ເຜີຍແຜ່ລາຍງານສະບັບຫຼ້າສຸດກ່ອນໜ້ານີ້ ພ້ອມຄາດຄະເນວ່າ ອິນເດຍກຽມຈະເປັນປະເທດທີ່ມີຈຳນວນປະຊາກອນຫຼາຍທີ່ສຸດໃນໂລກ ແຊງຈີນເກືອບ 3 ລ້ານຄົນ ໃນກາງປີ 2023.

ປັດຈຸບັນ ຈີນກຳລັງປະສົບບັນຫາອັດຕາການເກີດຕ່ຳ ຈຳນວນປະຊາກອນຈີນ ຫຼຸດລົງຫຼາຍໃນປີ 2022 ຖືເປັນຄັ້ງທຳອິດນັບແຕ່ປີ 1961.

# ສິງກະໂປ ສັ່ງປະຫານຊີວິດນັກໂທດ ຂໍ້ຫາລັກລອບຄ້າຂາຍກັນຊາ

ອີງຕາມການລາຍງານໃຫ້ຮູ້ວ່າ: ທາງການສິງກະໂປສັ່ງປະຫານຊີວິດຜູ້ຊາຍຄົນໜຶ່ງໃນວັນທີ 26 ເມສານີ້ ຈາກຄວາມຜິດຂໍ້ຫາພະຍາຍາມລັກລອບຄ້າຂາຍກັນຊາ ນ້ຳໜັກຫຼາຍກວ່າ 1 ກິໂລ ສົ່ງຜົນໃຫ້ກຸ່ມນັກສິດທິມະນຸດ ແລະ ນັກເຄື່ອນໄຫວອອກມາປະນາມຄຳຕັດສິນດັ່ງກ່າວ ທ່າມກາງໄລຍະເວລາທີ່ປະເທດອື່ນໆໄດ້ພະຍາຍາມຫາແນວທາງໃນການຫຼຸດຜ່ອນໂທດປະຫານ.



ເຖິງວ່າປັດຈຸບັນຫຼາຍປະເທດທົ່ວໂລກຈະເປີດໃຫ້ສາມາດນຳໃຊ້ກັນຊາໄດ້ຢ່າງຖືກຕ້ອງຕາມກົດໝາຍ, ແຕ່ສິງກະໂປຍັງມີຄຳສັ່ງຫ້າມນຳໃຊ້ກັນຊາ ແລະ ມີກົດໝາຍປາບປາມຢາເສບຕິດທີ່ເຂັ້ມງວດ ໂດຍລັດຖະບານສິງກະໂປຢືນຢັນຈະໃຊ້ໂທດປະຫານເພື່ອປາບຜູ້ຄ້າຂາຍຢາເສບຕິດ ແລະ ຮັກສາຄວາມປອດໄພໃຫ້ປະຊາຊົນພາຍໃນປະເທດ.

ທັງນີ້, ສິງກະໂປເປັນໜຶ່ງໃນປະເທດທີ່ມີມາດຕະການປາບປາມຢາເສບຕິດເຂັ້ມງວດຫຼາຍທີ່ສຸດໃນໂລກ ໂດຍໃນປີຜ່ານມາ ໄດ້ສັ່ງປະຫານຊີວິດນັກໂທດທັງໝົດ 11 ຄົນ ພ້ອມຢືນຢັນວ່າໂທດປະຫານຊີວິດຖືເປັນວິທີທີ່ມີປະສິດທິພາບໃນການປ້ອງກັນບໍ່ໃຫ້ມີການຊື້ຂາຍຢາເສບຕິດພາຍໃນປະເທດ, ອີກທັງປະຊາຊົນສ່ວນຫຼາຍໄດ້ສະໜັບສະໜູນນະໂຍບາຍນີ້.




# ຂັບຂີ່ສ່ຽງໄພ ຖ້າບໍ່ໃສ່ໃຈກົດຈະລາຈອນ

ໃນແຕ່ລະປີ, ພາຍຫຼັງເທສະການງານບຸນສຳຄັນເຊັ່ນ: ບຸນປີໃໝ່ລາວ, ບຸນປີໃໝ່ສາກົນ, ບຸນຊ່ວງເຮືອ, ອອກພັນສາ ລວມທັງບຸນທາດຫຼວງ ຢູ່ນະຄອນຫຼວງວຽງຈັນ, ພວກເຮົາກໍມັກຈະໄດ້ຍິນທັງຂ່າວດີ ແລະ ຂ່າວຮ້າຍທີ່ເປັນຜົນຈາກການຫຼິ້ນບຸນປະເພນີດັ່ງກ່າວ. ຂ່າວດີນັ້ນເວົ້າເຖິງບັນຍາກາດເບີກບານມ່ວນຊື່ນ,ການຮັກສາໄດ້ຮີດຄອງປະເພນີອັນດີງາມຂອງຊາດ. ສ່ວນຂ່າວຮ້າຍທີ່ມາໃນລະດັບຫົວແຖວ ກໍແມ່ນເລື່ອງອຸບັດເຫດຕໍ່ໃສ່ບັນຫາຂີ້ເຫຍື້ອຈາກນ້ຳມືຂອງຄົນຂາດສະຕິ ແລະ ຄວາມຮັບຜິດຊອບ. ສຳລັບເທສະການປີໃໝ່ລາວປະຈຳປີນີ້ ຂ່າວບອກວ່າມີຜູ້ເສຍຊີວິດຈາກອຸບັດເຫດຕາມທ້ອງຖະໜົນໃນທົ່ວປະເທດເກືອບ 40 ຄົນ ບໍ່ນັບຈຳນວນຜູ້ບາດເຈັບ ແລະ ຄວາມເສຍຫາຍທາງເສດຖະກິດ. ຜູ້ຂຽນມີຕົວເລກອ່າວເກົ່າແດ່ (ໜັງສືພິມປະເທດລາວ ປະຈຳວັນທີ 3 ມິຖຸນາ 2020) ທີ່ສະຫຼຸບເປັນຕົວເລກສະເລ່ຍກ່ຽວກັບຜົນເສຍຫາຍທີ່ເກີດຈາກອຸບັດເຫດ ໃນຊຸມປີຜ່ານມາ ແລະ ຄາດວ່າຍັງຈະເປັນທ່າອ່ຽງລວມ ໃນຕໍ່ໜ້າຄືໃນແຕ່ລະປີຢູ່ລາວ ພວກເຮົາມີຜູ້ເສຍຊີວິດຈາກອຸບັດເຫດທາງຖະໜົນ ໂດຍສະເລ່ຍ 1.000 ຄົນ, ມີຜູ້ບາດເຈັບຫຼາຍກວ່າ 8.000 ຄົນ, ມູນຄ່າຄວາມເສຍຫາຍທາງເສດຖະກິດນັ້ນມີຫຼາຍກວ່າ 500 ລ້ານໂດລາສະຫະລັດ. ນັ້ນແມ່ນຕົວເລກສະເລ່ຍ ໃນຊຸມປີຍ້ອນຫຼັງຫາປີ 2020. ສ່ວນຕົວເລກສະຫຼຸບໝົດປີ 2022 ຊີ້ໃຫ້ເຫັນວ່າໃນຕະຫຼອດປີມີອຸບັດເຫດເກີດຂຶ້ນທັງໝົດ 6.440 ຄັ້ງ, ມີຜູ້ບາດເຈັບຂັ້ນສາຫັດ 1.333 ຄົນ ແລະ ເສຍຊີວິດ 947 ຄົນ, ເທົ່າກັບ 2,6 ຄົນ ທີ່ເສຍຊີວິດໃນແຕ່ລະວັນ ຫຼື ເທົ່າກັບ 18 ຄົນ ໃນແຕ່ລະ 1 ແສນຄົນ (ຂໍ້ມູນຈາກໜັງສືພິມວຽງຈັນທາມ 7 ເມສາ 2023). ສ່ວນສາເຫດທີ່ພາໃຫ້ເກີດອຸບັດເຫດນັ້ນ ເຊື່ອວ່າທຸກຄົນຄົງທ່ອງໄດ້ກັບປາກແລ້ວ ແຕ່ເຫດຜົນທີ່ເປັນຫົວໂຈກໝູ່ນັ້ນ ກໍຄືການລະເມີດກົດຈາລະຈອນນັ້ນເອງ (ລວມທັງຄວາມອ່ອນແອຂອງພາກສ່ວນຮັບຜິດຊອບຕິດຕາມ ແລະ ບັງຄັບໃຊ້ກົດໝາຍທີ່ກ່ຽວຂ້ອງ). ຕໍ່ໄປຜູ້ຂຽນມີຕົວຢ່າງກ່ຽວກັບມາດຕະການລົງໂທດຕໍ່ຜູ້ລະເມີດກົດຈາລະຈອນ ຢູ່ບາງປະເທດ. ຢູ່ສິງກະໂປ, ສະພາແຫ່ງຊາດຂອງປະເທດນີ້ ໄດ້ປັບປຸງກົດໝາຍວ່າດ້ວຍການຄົມມະນາຄົມ ໃນຕົ້ນເດືອນກໍລະກົດ 2019 ໂດຍໄດ້ປັບຂຶ້ນໂທດຈຳຄຸກຕໍ່ຜູ້ລະເມີດ. ໃນກົດໝາຍສະບັບເກົ່າຜູ້ຂັບລົດທີ່ລະເມີດກົດຈາລະຈອນນັ້ນເຮັດໃຫ້ຜູ້ອື່ນເສຍຊີວິດຍ້ອນຈະໄດ້ຮັບໂທດຈຳຄຸກສູງສຸດ 3 ປີ, ສ່ວນກົດໝາຍສະບັບປັບປຸງນັ້ນ ໄດ້ປັບໂທດຂຶ້ນເປັນຈຳຄຸກສູງສຸດ 8 ປີ. ນີ້ແມ່ນສຳລັບຜູ້ທີ່ມີຄວາມຜິດເປັນຄັ້ງທຳອິດ. ຖ້າເຮັດຜິດເປັນຄັ້ງທີ 2 ແລະ ຕໍ່ໆໄປ ກໍຈະຖືກຈຳຄຸກສູງສຸດ 15 ປີ ພ້ອມທັງຖືກຍຶດໃບຂັບຂີ່ແບບຖາວອນ, ສ່ວນກົດໝາຍສະບັບເກົ່ານັ້ນແມ່ນຈຳຄຸກສູງສຸດ 5 ປີ. ນອກຈາກນັ້ນ, ຜູ້ມີຄວາມຜິດຍັງຕ້ອງໄດ້ເສຍຄ່າປັບໃໝທາງແພ່ງຕາມຄວາມຜິດໃນແຕ່ລະສະຖານອີກດ້ວຍ. ຕໍ່ມາໃນວັນທີ 9 ກັນຍາ 2020 ລັດຖະບານສິງກະໂປກໍໄດ້ອະນຸມັດໃຫ້ມີການປັບປຸງກົດໝາຍວ່າດ້ວຍການຈາລະຈອນທາງບົກ ໂດຍໄດ້ເພີ່ມມາດຕະການເຂັ້ມງວດ ເພື່ອຕິດຕາມ ແລະ ຄວບຄຸມການໃຊ້ໂທລະສັບມືຖື ກໍຄືເຄື່ອງມືສື່ສານເອເລັກໂຕຣນິກເວລາຂັບລົດ. ພາຍໃຕ້ກົດໝາຍສະບັບປັບປຸງນີ້, ການໃຊ້ໂທລະສັບມືຖື, ການເປີດເບິ່ງອີເມວ ຫຼື ຫຼິ້ນເກມອິນເຕີເນັດເວລາຂັບລົດຖືວ່າເປັນການກະທຳທີ່ຜິດກົດໝາຍ (ຖ້າມີການພົບເຫັນວ່າຜູ້ຂັບລົດມີເຄື່ອງມືດັ່ງກ່າວຄາຢູ່ມືອີກກໍ້າໜຶ່ງເວລາຂັບລົດ). ຢູ່ຕາມເສັ້ນທາງໃນສິງກະໂປນັ້ນ ມີການຕິດຕັ້ງກ້ອງວົງຈອນປິດປະສິດທິພາບສູງສາມາດຈັບພາບຂອງຜູ້ຂັບລົດໄດ້ຢ່າງສະບາຍ. ນອກຈາກນັ້ນ, ທາງການສິງກະໂປ ຍັງໄດ້ທົບທວນຄືນລະບຽບການກ່ຽວກັບການນຳໃຊ້ໃບຂັບຂີ່ຕ່າງປະເທດຄືຄົນຕ່າງປະເທດທີ່ມີໃບຂັບຂີ່ຕ່າງປະເທດນັ້ນ ສາມາດນຳໃຊ້ໃບຂັບຂີ່ດັ່ງກ່າວໄດ້ໃນກຳນົດ 6 ເດືອນນັບແຕ່ມື້ທີ່ຜູ້ກ່ຽວໄດ້ພັກເຊົາ ຫຼື ເລີ່ມເຮັດວຽກຢູ່ສິງກະໂປ, ເມື່ອຈົບກຳນົດ 6 ເດືອນແລ້ວ, ກໍຕ້ອງໄດ້ປ່ຽນເປັນໃບຂັບຂີ່ພາຍໃນ. ຖ້າໃບຂັບຂີ່ຕ່າງປະເທດກຳນົດໃຊ້ກັບລົດຕູ້, ລົດເມ ຫຼື ລົດບັນທຸກຂະໜາດໃຫຍ່, ເຈົ້າຂອງໃບຂັບຂີ່ຍັງຕ້ອງໄດ້ເຂົ້າຝຶກອົບຮົມ ແລະ ທົດລອງຂັບຂີ່ລົດດັ່ງກ່າວຕົວຈິງອີກທັງນີ້ ເພື່ອໃຫ້ສາມາດກຳໄດ້ກົດລະບຽບກ່ຽວກັບການຂັບລົດຊະນິດດັ່ງກ່າວ. ສຸດທ້າຍແມ່ນຂ່າວຈາກປະເທດອົດສະຕຣາລີ ທີ່ບອກວ່າ ນັບແຕ່ວັນທີ 1 ມັງກອນ 2019 ເປັນຕົ້ນມາ, ກົດຈາລະຈອນສະບັບປັບປຸງໄດ້ຮັບການປະຕິບັດໂດຍໄດ້ກຳນົດເປັນຄວາມຜິດຂັ້ນຮ້າຍແຮງສຳລັບຜູ້ໃຊ້ໂທລະສັບມືຖືເວລາຂັບລົດ. ໄປຄຽງຄູ່ກັບການກຳນົດໂທດ, ທາງການອົດສະຕຣາລີ ໄດ້ຕິດຕັ້ງກ້ອງວົງຈອນປິດຄຸນນະພາບສູງສາມາດຈັບພາບຜູ້ລັກລອບໃຊ້ໂທລະສັບມືຖືເວລາຂັບລົດໄດ້ຢ່າງແມ່ນຍຳ. ຄວາມຜິດແຕ່ລະຄັ້ງນັ້ນ ຈະຖືກລົງໂທດດ້ວຍການຕັດຄະແນນໃນໃບຂັບຂີ່ ແລະ ຈະຖືກປັບໃໝຕາມຈຳນວນຄະແນນທີ່ຖືກຕັດນັ້ນ.




## ຊ້າເປັນປະຈຳ

*#ບ່າວກະບື*

ບຸນເລື່ອນ ຢືນຢູ່ໃກ້ໆກັບປະຕູໄຊ. ເຂົາຢຽດມືອອກເໝືອນກັບວ່າເຂົາຕ້ອງການຮັບເອົາສິ່ງໃດສິ່ງໜຶ່ງຕົກລົງມາຈາກທ້ອງຟ້ານັ້ນລະ.

ຄົນກາຍທາງຜູ້ໜຶ່ງເຫັນລາວ ຈຶ່ງຖາມຂຶ້ນວ່າ ເຂົາເຮັດຫຍັງ.

ບຸນເລື່ອນຕອບ: "ເວລາເຮົາຂຶ້ນໄປຈອມອະນຸສາວະລີປະຕູໄຊ, ໂມງເຮົາບັງເອີນພັງຕົກລົງມາ ດັ່ງນັ້ນເຮົາຈຶ່ງລົງມາຂ້າງລຸ່ມເພື່ອລໍຖ້າເອົາໂມງ.

"ໂມງເຈົ້າຕົກລົງມາແຕ່ດົນແລ້ວ, ບັດນີ້ເຈົ້າຊິຮັບເອົາໄດ້ແນວໃດ?"

ບຸນເລື່ອນຕອບວ່າ: "ໂມງຂ້ອຍມັນຊ້າເຄິ່ງຊົ່ວໂມງເປັນປະຈຳ".

## ALWAYS LATE

***#BAOKBU***

BoonChuen was standing near the Victory Gate (Patouxay Monument), his hands stretched as if he wanted to catch something from the sky.

A passerby saw him and asked what he was doing.

BoonChuen replied, "When I was on the top of Patouxay, my watch fell off, so I came down to catch it!"

"Your watch fell down so long ago, how can you catch it now?"

BoonChuen replied: "My watch is always half an hour late"






ໂທເວລາຂັບ ຄັບບໍ່ຮູ້ໂຕ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ :
ທ່ານ ສິງຄຳ ວົງພະຈັນ

ຄະນະຊີ້ນຳອຸນທີ່ປຶກສາ :
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

ຄະນະບັນນາທິການ :
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ຂັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

ກອງບັນນາທິການ :
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ທອນສະນິດ
ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ :
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ນາງ ນິດຕາ ຄຸນປາກດີ